ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-04 ກັນຍາ 2022
ປີທີ 11
ສະບັບທີ 872

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນສິງຫາ ພິຈາລະນາຫລາຍບັນຫາສຳຄັນ



(ສພຊ) ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນສິງຫາ 2022 ໄດ້ໄຂຂຶ້ນໃນລະຫວ່າງວັນທີ 25-26 ສິງຫາຜ່ານມາ, ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ແຂກຖືກເຊີນຈາກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນສິງຫາ 2022 ດຳເນີນໃນກາງທີ່ບັນດາກົງຈັກເສນາທິການຂອງສະພາແຫ່ງຊາດກຳລັງຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງໄດ້ພິຈາລະນາເນື້ອໃນສຳຄັນຕ່າງໆ ເປັນຕົ້ນ ບົດລາຍງານການຮຽບຮຽງກົດໝາຍ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ); ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ (ສ້າງໃໝ່); ກົດໝາຍວ່າດ້ວຍການປັບປຸງກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ); ບົດລາຍງານການກະກຽມບັນດາຮ່າງກົດໝາຍ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ແລະ ທົບທວນຄືນແຜນການສ້າງ ແລະ ປັບປຸງກົດໝາຍແຕ່ປີ 2023-2025; ບົດລາຍງານການຈັດຕັ້ງທາບທາມຄຳເຫັນຕໍ່ຮ່າງກົດໝາຍຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ; ບົດລາຍງານຂໍທິດຊີ້ນຳກ່ຽວກັບກົນໄກວິທີແກ້ໄຂຄຳຮ້ອງຂໍຄວາມເປັນທຳ ລວມທັງການພິຈາລະນາຄຳຮ້ອງຂໍຄວາມເປັນທຳຈຳນວນໜຶ່ງ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານກ່ຽວກັບການຂໍຫັນປ່ຽນເນື້ອທີ່ດິນ

ອ່ານຕໍ່ໜ້າ 2

## ຮອງປະທານສະພາແຫ່ງຊາດ ສືບຕໍ່ເຮັດວຽກຢູ່ແຂວງເຊກອງ



ໜ້າ 2

## ຄະນະຜູ້ແທນ ສພຊ ເຂົ້າຮ່ວມກອງປະຊຸມສະມາຊິກລັດຖະສະພາເພດຍິງ (WAIPA)

(ສພຊ) ວັນທີ 30 ສິງຫາ 2022 ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ, ຄະນະກົມ, ຄະນະພະແນກ ແລະ ພະນັກງານ-ວິຊາການ ຈຳນວນໜຶ່ງຂອງສະພາແຫ່ງຊາດລາວ ໄດ້ເຂົ້າຮ່ວມກອງ

ອ່ານຕໍ່ໜ້າ 3




## ປະທານ ກບຜ ເຄື່ອນໄຫວເຮັດວຽກຢູ່ແຂວງຫລວງນ້ຳທາ

(ສພຊ) ວັນທີ 22 ສິງຫາຜ່ານມາ, ກຳມາທິການບັນດາເຜົ່າ (ກບຜ) ສະພາແຫ່ງຊາດ ໄດ້ເຄື່ອນໄຫວຕິດຕາມ, ກວດກາ ແລະ ເກັບກຳຂໍ້ມູນວຽກງານບັນດາເຜົ່າ ປະຈຳປີ 2022 ຢູ່ແຂວງຫລວງນ້ຳທາ ນຳໂດຍທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ພ້ອມດ້ວຍຄະນະ ໂອກາດນີ້ໄດ້ເຂົ້າພົບປະກັບທ່ານ ຄຳໄຫລ ສີປະເສີດ ເຈົ້າແຂວງຫລວງນ້ຳທາ ແລະ ທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວໃນຄັ້ງນີ້; ພ້ອມນັ້ນ, ຍັງໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດວຽກງານພົ້ນເດັ່ນໂດຍຫຍໍ້ຂອງແຂວງ ແລະ ສະພາປະຊາຊົນແຂວງຫລວງນ້ຳທາ.

ໃນໂອກາດນີ້, ໄດ້ປະຊຸມຮ່ວມກັບບັນດາພະແນກການທີ່ກ່ຽວຂ້ອງ ແລະ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ຄຳຈັນ ໂສຕາປະເສີດ ເຂົ້າຮ່ວມມີທ່ານ ນາງ ອຸ່ນຫລ້າ ອ້ຽງລໍລາດ ຮອງປະທານສະພາປະຊາຊົນແຂວງ; ມີບັນດາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະ

ອ່ານຕໍ່ໜ້າ 3



## ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຜົ້ງສາລີ



ໜ້າ 3

## ສຳມະນາວຽກງານກຳມາທິການລັດຖະສະພາ ຄັ້ງທີ 3

(ສພຊ) ໃນລະຫວ່າງວັນທີ 24-25 ສິງຫາ 2022 ໄດ້ຈັດກອງປະຊຸມສຳມະນາກ່ຽວກັບວຽກງານກຳມາທິການລັດຖະສະພາໃຫ້ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ແລະ ສະມາຊິກລັດຖະສະພາໄອປາ ທີ່ສະພາແຫ່ງຊາດ, ນະຄອນຫລວງວຽງຈັນ ກອງປະຊຸມດັ່ງກ່າວແມ່ນຈັດ

ອ່ານຕໍ່ໜ້າ 2





ໜ້າ 4


ໜ້າ 2


ໜ້າ 5


ໜ້າ 5


ໜ້າ 5


ໜ້າ 8

ຊົມເຊີຍວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ຢ່າງສຸດໃຈ!

## ຮອງປະທານ...

(ສພຊ) ວັນທີ 20 ສິງຫາ 2022 ທີ່ຫ້ອງວ່າການແຂວງເຊກອງ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ສືບຕໍ່ເຄື່ອນໄຫວຢ້ຽມຢາມ ແລະ ເຂົ້າພົບທ່ານ ເຫລັກໄຫລ ສີວິໄລ ເຈົ້າແຂວງໆເຊກອງ, ມີທ່ານ ແພງສີ ສີລາວີ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ; ຈາກນັ້ນ, ທ່ານ ເຈົ້າແຂວງໆເຊກອງ ໄດ້ລາຍງານກ່ຽວກັບສະພາບລວມ ແລະ ຈຸດພິເສດຂອງແຂວງ ໂດຍສະເພາະແມ່ນໄດ້ຍົກສູງຄວາມຮັບຜິດຊອບປະສານສົມທົບກັບສະພາປະຊາຊົນແຂວງ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງໃນການຄົ້ນຄວ້າ ແລະ ແກ້ໄຂບັນຫາທີ່ສຳຄັນຂອງທ້ອງຖິ່ນໄດ້ຢ່າງທ່ວງທັນ ເຮັດໃຫ້ສັງຄົມມີຄວາມສະຫງົບໂດຍພື້ນຖານ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານ ສົມມາດ ພົລເສນາ ພ້ອມດ້ວຍຄະນະ ໄດ້ເຮັດວຽກຮ່ວມກັບສະພາປະຊາຊົນແຂວງ (ສພຂ) ເຊກອງ ໂດຍການຕ້ອນຮັບຂອງທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ພະແນກການ ແລະ ພະນັກງານ-ລັດຖະກອນ ສພຂ ເຂົ້າຮ່ວມ; ຈາກນັ້ນ, ທ່ານປະທານສະພາປະຊາຊົນແຂວງ ໄດ້ລາຍງານໂດຍຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຂອງ ສພຂ ເຊກອງ ເຊິ່ງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດ 3 ພາລະບົດບາດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ; ພ້ອມນັ້ນ, ຍັງໄດ້ຍົກສູງຄວາມຮັບຜິດຊອບໃນການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ແລະ ແກ້ໄຂບັນຫາສຳຄັນຕ່າງໆໄດ້ຢ່າງທ່ວງທັນ ແລະ ໃນບໍ່ດົນມານີ້ຍັງໄດ້ພ້ອມກັນຄົ້ນຄວ້າບັນດາເນື້ອໃນທີ່ສຳຄັນຕ່າງໆຂອງທ້ອງຖິ່ນເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ເຊກອງ ຊຸດທີ II ທີ່ໄດ້ຈັດຂຶ້ນໃນລະຫວ່າງວັນທີ 16-18 ສິງຫາ 2022 ຜ່ານມານີ້ ເຊິ່ງມີທັງໝົດ 8 ເນື້ອໃນ ແລະ ໄດ້ອອກເປັນມະຕິຂອງກອງປະຊຸມ 4 ເນື້ອໃນຄື: ວຽກງານອົງການປົກຄອງແຂວງ 2 ເນື້ອໃນ, ວຽກງານ ສພຂ 1 ເນື້ອໃນ ແລະ ວຽກງານກໍ່ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 1 ເນື້ອໃນ.

ພາຍຫລັງທີ່ຮັບຟັງການລາຍງານແລ້ວ, ທ່ານຮອງປະທານສະພາແຫ່ງຊາດ ກໍໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການຈັດຕັ້ງປະຕິບັດວຽກງານຂອງ ສພຂ ທີ່ຍາດໄດ້ຜົນສຳເລັດຫລາຍດ້ານ ແລະ ໄດ້ເນັ້ນໜັກໃຫ້ ສພຂ ກໍຄືຄະນະນຳ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16, ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຫລັກແຫລ່ງຂອງ ສພຂ ເອົາໃຈໃສ່ຢ່າງຕັ້ງໜ້າເຂົ້າໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ, ເອົາໃຈໃສ່ຄົ້ນຄວ້າ ແລະ ພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ, ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ນຳໄປເຜີຍແຜ່, ເຊື່ອມຊຶມ ໃຫ້ພໍ່ແມ່ປະຊາຊົນ ກໍຄືຂະແໜງການທີ່ກ່ຽວຂ້ອງ ໄດ້ຮັບຮູ້ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ໃນໂອກາດດຽວກັນນີ້, ທ່ານ ສົມມາດ ພົລເສນາ ຍັງໄດ້ມອບເຄື່ອງໄຟຟ້າພະລັງງານແສງອາທິດ ຈຳນວນ 4 ຊຸດ ລວມມູນຄ່າ 55 ລ້ານກວ່າກີບ ມອບໃຫ້ ສພຂ ໂດຍການກ່າວຮັບຂອງທ່ານ ດົງເພັດ ພະຍົນ ເຂົ້າຮ່ວມເປັນສັກຂີພິຍານຈາກສະພາແຫ່ງຊາດ ແລະ ສພຂ ເຊກອງ.

(ນາງ ນາລີວັນ)

## ກອງປະຊຸມ...

ປ່າໄມ້ທຳມະຊາດ ໄປເປັນທີ່ດິນອຸດສາຫະກຳ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານກ່ຽວກັບການຂໍຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ ສຳລັບການນຳເຂົ້າວັດຖຸດິບ ແລະ ຊິ້ນສ່ວນປະກອບ ເພື່ອຮັບໃຊ້ໃນວຽກງານການຜະລິດ ແລະ ການປະກອບລົດ ຈຳໜ່າຍພາຍໃນປະເທດ ຂອງບໍລິສັດໂອໂຕ້ເວີນ ຈຳກັດຜູ້ດຽວ; ບົດລາຍງານການຕິດຕາມກວດກາ ແລະ ເກັບກຳຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດວຽກງານທ່າບົກ 3 ແຫລ່ງທີ່ໄດ້ເປີດບໍລິການ (ທ່າບົກເຊໂນສະຫວັນນະເຂດ, ທ່າບົກວັງເຕົ່າ ແລະ ທ່າບົກທ່ານາແລ້ງ); ແຜນການຕິດຕາມກວດກາໂຄງການພັດທະນາເສດຖະກິດ-ສັງຄົມ ທີ່ສົ່ງຜົນກະທົບຕໍ່ການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ ໄລຍະ 6 ເດືອນທ້າຍປີ 2022 ຂອງຄະນະປະຈຳສະພາແຫ່ງຊາດ; ຮັບຟັງບົດລາຍງານການຕິດຕາມກວດກາກ່ຽວກັບການຄວບຄຸມການແຜ່ລະບາດຂອງພະຍາດໄຂ້ຍຸງລາຍ ແລະ ພະຍາດໂຄວິດ-19 ຈາກກະຊວງສາທາລະນະສຸກ ແລະ ກຳມາທິການວັດທະນະທຳ-ສັງຄົມ; ບົດລາຍງານການຕິດຕາມກວດກາການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 59/ສພຊ, ລົງວັນທີ 8 ກໍລະກົດ 2022 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19; ຮ່າງແຜນການຕິດຕາມກວດກາ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳຂອງປະຊາຊົນ ແກ້ໄຂບັນຫາການວ່າງງານ ເພື່ອກະກຽມລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX; ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການແຕ່ງຕັ້ງກຸ່ມສະມາຊິກສະພາແຫ່ງຊາດ ເພດຍິງ ຊຸດທີ IX ຈາກກຳມາທິການວັດທະນະທຳ-ສັງຄົມ; ການກະກຽມການຕ້ອນຮັບຄະນະຜູ້ແທນຂັ້ນສູງກຳປູເຈຍ ນຳໂດຍສົມເດັດ ເຮັງຊຳ ຣິນ ປະທານສະພາແຫ່ງຊາດ ແຫ່ງຣາຊະອານາຈັກກຳປູເຈຍ ພ້ອມດ້ວຍພັນລະຍາ ແລະ ຄະນະ ທີ່ຈະເດີນທາງມາຢ້ຽມຢາມສັນຖະວະໄມຕີ ສປປ ລາວ ຢ່າງເປັນທາງການ; ສະເໜີພິຈາລະນາແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ເພື່ອກະກຽມເປັນເຈົ້າພາບຈັດກອງປະຊຸມທີ່ ສປປລາວ ຄື: ກອງປະຊຸມຮ່ວມລະຫວ່າງ 3 ສະພາແຫ່ງຊາດ ກຳປູເຈຍ, ລາວ ແລະ ຫວຽດນາມ (CLV) ຄັ້ງທີ 1 ໃນເດືອນມີນາ 2023; ກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ໃນທ້າຍເດືອນກັນຍາ 2024; ລາຍງານແຜນການຮ່ວມມືລະຫວ່າງຄະນະສະມັດຊາລັດຖະສະພາຝຣັ່ງໂກໂຟນີ ຂອງສະພາແຫ່ງຊາດລາວ ແລະ ອົງການສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ (APF); ແຜນກິດຈະກຳສ້າງຂະບວນການສະເຫລີມສະຫລອງປີສະມັກຄີມິດຕະພາບລາວ-ຫວຽດນາມ ຄົບຮອບ 60 ປີ; ພ້ອມກັນນັ້ນ, ຜູ້ແທນກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ບົດລາຍງານ ແລະ ແຜນການຕ່າງໆທີ່ໄດ້ນຳມາສະເໜີໃນຄັ້ງນີ້.

(ສອນສັກ ວັນວິໄຊ)

## ສຳມະນາ...

ໃນແບບເຊິ່ງໜ້າສຳລັບພະນັກງານທີ່ຢູ່ພາຍໃນສະພາແຫ່ງຊາດລາວ ແລະ ແບບອອນລາຍສຳລັບພະນັກງານສະມາຊິກລັດຖະສະພາໄປອາ ເຊິ່ງມີ 4 ປະເທດເຂົ້າຮ່ວມຄື: ກຳປູເຈຍ, ຟີລິບປິນ, ໄທ ແລະ ລາວ ໂດຍການກ່າວເປີດກອງປະຊຸມຂອງທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ.




ຈຸດປະສົງຂອງກອງປະຊຸມຄັ້ງນີ້, ເພື່ອເປັນການສົ່ງເສີມສ້າງຄວາມຮູ້ໃຫ້ແກ່ວິຊາການກ່ຽວກັບວຽກງານກຳມາທິການຂອງລັດຖະສະພາ ຄັ້ງທີ 3 ຂອງສູນລັດຖະສະພາອາຊີ ເຊິ່ງກອງປະຊຸມດັ່ງກ່າວ ໄດ້ຮັບຮູ້ກ່ຽວກັບລະບົບວຽກງານຄະນະກຳມາທິການລັດຖະສະພາໃນສະພາການາດາ (ລະດັບຊາດ) ຈາກທ່ານ John Christopher ຜູ້ອຳນວຍການດ້ານການພັດທະນາຄວາມສາມາດ, ສູນຄົ້ນຄວ້າລັດຖະສະພາແຫ່ງອາຊີ (PC Asia) ແລະ ໄດ້ຮັບຟັງການສາຍບັນທຶກວິດີໂອ ກ່ຽວກັບລະບົບວຽກງານຄະນະກຳມາທິການໃນສະພານິຕິບັນຍັດຂອງອອນທາຣຽວ, ການາດາ (ລະດັບແຂວງ) ຈາກທ່ານ Michael Morden ຜູ້ອຳນວຍການຄົ້ນຄວ້ານິຕິກຳ, ສະພານິຕິບັນຍັດຂອງອອນທາຣຽວ ການາດາ; ໄດ້ຮັບຟັງການແລກປ່ຽນປະສົບການກ່ຽວກັບການເຮັດວຽກຂອງຄະນະກຳມາທິການລັດຖະສະພາຈາກ 4 ປະເທດທີ່ເຂົ້າຮ່ວມ ປະກອບມີ: ພາລະບົດບາດຂອງກຳມາທິການ; ໜ້າວຽກຂອງພະນັກງານໃນກຳມາທິການ; ໜ້າທີ່ຄວາມຮັບຜິດຊອບຂອງກຳມາທິການ ແລະ ພາລະບົດບາດຂອງນັກຄົ້ນຄວ້າຄະນະກຳມະການທີ່ໄດ້ຮັບມອບໝາຍໃຫ້ຄະນະກຳມາທິການ ນອກຈາກນັ້ນ, ຍັງໄດ້ຮັບຟັງການສະເໜີບົດ ໂດຍຜ່ານລະບົບຊູມ (ZOOM) ກ່ຽວກັບລະບົບວຽກງານຄະນະກຳມາທິການໃນລັດຖະສະພາຂອງສະວິດ ຈາກທ່ານ Michael Ruch ຮອງເລຂາທິການຄະນະກຳມະການສິ່ງແວດລ້ອມ, ການວາງແຜນພື້ນທີ່ ແລະ ພະລັງງານ, ຝ່າຍບໍລິການລັດຖະສະພາສະວິດ ແລະ ຈາກທ່ານ Nicolas Reist ຮອງເລຂາທິການ, ຄະນະກຳມະການຕຸລາການ ແລະ ນັກວິເຄາະນະໂຍບາຍ, ຄະນະກຳມະການດ້ານກົດໝາຍ, ຝ່າຍບໍລິການລັດຖະສະພາສະວິດ.

ຫລັງຈາກນັ້ນ, ໄດ້ມີການສົນທະນາແລກປ່ຽນບົດຮຽນ ເຊິ່ງກັນແລະກັນ ລະຫວ່າງພະນັກງານພາຍໃນສະພາແຫ່ງຊາດ ແລະ ສະມາຊິກລັດຖະສະພາໄອປາ ພ້ອມທັງໄດ້ຮັບຟັງການປະກອບຄຳເຫັນ ແລະ ຜົນຂອງກອງປະຊຸມ ຈາກທ່ານ John Christopher.

(ຂ່າວ: ນາງ ນິດຕາ ຄຸນປາກດີ,
ພາບ: ອານຸສອນ ພູມມີທອນ)

## ເລື່ອງເດັ່ນ, ຂ່າວເດັດ

\# ຄັດໂດຍ: ຫອມສະນິດ

❑ ໃນ 6 ເດືອນຕົ້ນປີ 2022 ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ນະຄອນຫລວງວຽງຈັນ (ນວ) ສາມາດຂຶ້ນທະບຽນຍານພາຫະນະທົ່ວ ນວ ໄດ້ທັງໝົດ 26.163 ຄັນ; ໃນນັ້ນ, ລົດຈັກ 15.085 ຄັນ, ລົດເກງ 1.585 ຄັນ, ລົດກະບະ 4.969 ຄັນ, ລົດຈິບ 2.592 ຄັນ, ລົດຕູ້ 315 ຄັນ, ລົດບັນທຸກ 1.841 ຄັນ ແລະ ລົດໂດຍສານ 7 ຄັນ ແລະນັບແຕ່ປີ 2000 ມາຮອດເດືອນມິຖຸນາ 2022 ສາມາດຂຶ້ນທະບຽນຍານພາຫະນະທົ່ວ ນວ ໄດ້ທັງໝົດ 1.061.794 ຄັນ; ໃນນັ້ນ, ລົດຈັກ 725.245 ຄັນ, ລົດສາມລໍ້ 3.405 ຄັນ, ລົດເກງ 70.854 ຄັນ, ລົດກະບະ 146.649 ຄັນ, ລົດຈິບ 40.665 ຄັນ, ລົດຕູ້ 31.743 ຄັນ, ລົດບັນທຸກ 40.942 ຄັນ ແລະ ລົດໂດຍສານ 2.291 ຄັນ; ໃນນັ້ນ, ຫລາຍກວ່າໝູ່ປີ 2016 ມີ 69.102 ຄັນ ຖັດລົງມາປີ 2015 ມີ 68.159 ຄັນ ປີ 2013 ມີ 66.499 ຄັນ ປີ 2014 ມີ 61.457 ຄັນ ຕາມລຳດັບ.

**ນສພ. ວຽງຈັນໃໝ່ 24/08/2022**

❑ ລັດວິສາຫະກິດໄຟຟ້າລາວ (ຟຟລ) ໄດ້ເປີດນຳໃຊ້ໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ ຈັກເບີ 6 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂຄງການດັ່ງກ່າວນີ້ແມ່ນໄດ້ເຈາະໂຕເຂື່ອນທີ່ມີຢູ່ ເພື່ອຕິດຕັ້ງທໍ່ສົ່ງນ້ຳ, ຂະຫຍາຍໂຮງຈັກເກົ່າອອກດ້ານຂ້າງ ແລະ ຕິດຕັ້ງເຄື່ອງຈັກໄຟຟ້າໃໝ່ອີກ 1 ໜ່ວຍ ມີກຳລັງຕິດຕັ້ງ 40 MW ເຮັດໃຫ້ເຂື່ອນໄຟຟ້ານ້ຳງື່ມ 1 ມີກຳລັງຕິດຕັ້ງທັງໝົດ 275 MW ສາມາດຜະລິດກະແສໄຟຟ້າສົ່ງເຂົ້າລະບົບຂອງໄຟຟ້າລາວເພີ່ມຂຶ້ນ ເຊິ່ງໂຄງການດັ່ງກ່າວເປັນໂຄງການທີ່ໄດ້ຮັບເງິນກູ້ແບບຜ່ອນຜັນຈາກລັດຖະບານຍີ່ປຸ່ນ.

**ນສພ. ປະຊາຊົນ 29/08/2022**

❑ ນັບແຕ່ຕົ້ນເດືອນມັງກອນຫາປັດຈຸບັນ, ທົ່ວປະເທດ ມີກໍລະນີຕິດເຊື້ອສະສົມພະຍາດໄຂ້ຍຸງລາຍ ທັງໝົດ 11.900 ກໍລະນີ ເສຍຊີວິດສະສົມ 14 ຄົນ; ໃນນັ້ນ, ນະຄອນຫລວງວຽງຈັນ ມີຕົວເລກຜູ້ຕິດເຊື້ອສະສົມສູງເຖິງ 6.161 ກໍລະນີ, ເສຍຊີວິດ 5 ຄົນ ຮອງລົງມາແມ່ນແຂວງຫລວງນ້ຳທາ 1.109 ກໍລະນີ, ສາລະວັນ 938 ເສຍຊີວິດ 3 ຄົນ, ເຊກອງ 846 ກໍລະນີ, ອັດຕະປື 788 ກໍລະນີ ເສຍຊີວິດ 4 ຄົນ, ສະຫວັນນະເຂດ 456 ກໍລະນີ, ຫລວງພະບາງ 371 ກໍລະນີ, ວຽງຈັນ 288 ກໍລະນີ, ໄຊຍະບູລີ 213 ກໍລະນີ, ອຸດົມໄຊ 242 ກໍລະນີ ເສຍຊີວິດ 1 ຄົນ, ຄຳມ່ວນ 183 ກໍລະນີ, ຈຳປາສັກ 168 ກໍລະນີ, ບໍລິຄຳໄຊ 48 ກໍລະນີ, ຊຽງຂວາງ 29 ກໍລະນີ ເສຍຊີວິດ 1 ຄົນ, ບໍ່ແກ້ວ 26 ກໍລະນີ, ໄຊສົມບູນ 18 ກໍລະນີ, ຫົວພັນ 9 ກໍລະນີ ແລະ ຜົ້ງສາລີ 7 ກໍລະນີ.

**ນສພ. ວຽງຈັນໃໝ່ 29/08/2022**

# ສນສ ຕິດຕາມ, ຊຸກຍູ້ ແລະ ເກັບກຳຂໍ້ມູນ ຢູ່ ສພຂ ອຸດົມໄຊ



(ສພຊ) ວັນທີ 22 ສິງຫາ ຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ທ່ານ ປອ. ຢາງກູ້ ຢາງລືໄຊ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ພ້ອມດ້ວຍຄະນະທີມງານ ໄດ້ເຮັດວຽກຮ່ວມກັບສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໂດຍການຕ້ອນຮັບຂອງທ່ານ ນາງ ຄຳພອນ ພິມມະຈັນ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳ, ຄະນະເລຂາທິການສະພາປະຊາຊົນແຂວງ ແລະ ພະນັກງານຈາກ ສພຂ ເຂົ້າຮ່ວມ.

ທັງນີ້, ກໍເພື່ອຕິດຕາມ, ຊຸກຍູ້ ແລະ ເກັບກຳຂໍ້ມູນວຽກງານສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ຈາກນັ້ນ, ໄດ້ຮັບຟັງການລາຍງານວຽກງານຂອງ ສພຂ ທີ່ຕິດພັນກັບວຽກງານຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ໂອກາດນີ້, ບັນດາທ່ານຜູ້ເຂົ້າຮ່ວມ ໄດ້ພ້ອມກັນປຶກສາຫາລື, ຕີລາຄາຄືນກ່ຽວກັບການເຮັດວຽກ, ການພົວພັນປະສານງານໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ເຖິງຂໍ້ສະດວກ, ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ເພື່ອພ້ອມກັນປັບປຸງແກ້ໄຂໃຫ້ມີການຫັນປ່ຽນທີ່ດີຂຶ້ນ ກ່ຽວກັບການນຳພາ-ຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ກັບສະພາປະຊາຊົນຂັ້ນແຂວງ ໃນໄລຍະຜ່ານມາ ແລະ ຈະໄດ້ສືບຕໍ່ການພົວພັນປະສານງານ ແລະ ເຄື່ອນໄຫວວຽກງານຮ່ວມກັນໃນຕໍ່ໜ້າ ໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ປະຕິບັດຕາມ 3 ພາລະບົດບາດຂອງຕົນຢ່າງເຕັມທີ່.

(ແສງພອນ ອິນນະລົງ)

## ປະທານ...

ພາປະຊາຊົນແຂວງ, ຫົວໜ້າ, ຮອງຫົວໜ້າອົງການ, ພະແນກການທີ່ກ່ຽວຂ້ອງຂອງແຂວງ, ຫົວໜ້າ, ຮອງຫົວໜ້າຂະແໜງເຂົ້າຮ່ວມ 25 ຄົນ ຍິງ 8 ຄົນ.

ກອງປະຊຸມ ໄດ້ຮັບຟັງການລາຍງານຂອງອົງການແນວລາວສ້າງຊາດແຂວງ ຕາມຄຳຖາມເຈາະຈີ້ມຂອງປະທານກຳມາທິການບັນດາເຜົ່າ ເປັນຕົ້ນກ່ຽວກັບການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ ແລະ ບັນດາເຜົ່າ ຢູ່ພາຍໃນແຂວງ; ຮັບຟັງການລາຍງານຂອງພະແນກພາຍໃນແຂວງ ໃນການຈັດຕັ້ງປະຕິບັດດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ການປົກປ້ອງການເຄື່ອນໄຫວຂອງສາສະໜາ ສະບັບເລກທີ 315/ລບ, ລົງວັນທີ 16/8/2016, ວຽກງານການປົກຄອງທ້ອງຖິ່ນ ແລະ ວຽກງານ 3 ສ້າງ ແລະ ວຽກງານພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່; ການສ້າງບ້ານພັດທະນາທີ່ຕິດພັນກັບຜົນກະທົບຈາກໂຄງການພັດທະນາ ແລະ ການແກ້ໄຂບັນຫາຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການພັດທະນາດັ່ງກ່າວຕໍ່ປະຊາຊົນລາວບັນດາເຜົ່າ, ພ້ອມດຽວກັນນັ້ນ, ຜູ້ແທນກອງປະຊຸມໄດ້ແລກປ່ຽນປະກອບຄຳຄິດເຫັນຕໍ່ກັບວຽກງານບັນດາເຜົ່າພາຍໃນແຂວງຢ່າງມີຈຸດສຸມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານບັນດາເຜົ່າພາຍໃນແຂວງ, ເມືອງ ຂອງແຂວງຫລວງນ້ຳທາ ຖືກຕ້ອງຕາມແນວທາງຂອງພັກ ແລະ ລະບຽບກົດໝາຍຂອງລັດ.

ໃນຕອນທ້າຍ, ທ່ານປະທານກຳມາທິການບັນດາເຜົ່າ ຍັງໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານອັນພົ້ນເດັ່ນຫລາຍດ້ານທີ່ຍາດມາໄດ້ ພ້ອມທັງຮຽກຮ້ອງໃຫ້ພາກສ່ວນທີ່ກ່ຽວຂ້ອງຍົກສູງໃນການຕິດຕາມ, ກວດກາ ກ່ຽວກັບວຽກງານເຜົ່າ ແລະ ສາສະໜາ ຢູ່ພາຍໃນແຂວງ ແລະ ລົງໃກ້ຊິດຕິດແທດກັບພໍ່ແມ່ປະຊາຊົນບັນດາເຜົ່າໃຫ້ຫລາຍຂຶ້ນກວ່າເກົ່າ ເພື່ອນຳເອົາວຽກງານເຜົ່າ ແລະ ສາສະໜານຳເອົາແນວທາງຂອງພັກ, ລະບຽບກົດໝາຍຂອງລັດ ລົງໃຫ້ປະຊາຊົນຮັບຮູ້ເຊື່ອມຊຶມ ແລະ ເຂົ້າໃຈ.

## ສຳເລັດ...

(ສພຊ) ໃນວັນທີ 25 ສິງຫາ ຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ຊຸດທີ II ໄດ້ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ ພາຍຫລັງດຳເນີນມາເປັນເວລາ 3 ວັນເຕັມ (23-25 ສິງຫາ 2022) ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງທ່ານ ທອງສີ ເສົາລຸລິພົມ ປະທານສະພາປະຊາຊົນແຂວງ; ໂດຍການເຂົ້າຮ່ວມມີທ່ານ ຄຳຜອຍ ວັນນະສານ ເຈົ້າແຂວງຜົ້ງສາລີ; ບັນດາທ່ານກຳມະການປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ອາດີດການນຳຂອງແຂວງ, ອາດີດ ສສຊ, ອາດີດ ສສຂ, ອົງການປົກຄອງແຂວງ, ອົງການແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ສະຫະພັນນັກຮົບເກົ່າແຂວງ, ອົງການພັກ-ລັດ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ພ້ອມດ້ວຍແຂກຖືກເຊີນ.

ກອງປະຊຸມຄັ້ງນີ້, ດຳເນີນໄປດ້ວຍບັນຍາກາດຟົດຟື້ນ ບັນດາຜູ້ແທນກອງປະຊຸມໄດ້ສຸມໃສ່ປະກອບຄຳຄິດຄຳເຫັນທີ່ມີລັກສະນະສ້າງ, ຮັດກຸມ, ຖືກປະເດັນ ແລະ ມີຄວາມເປັນເອກະພາບສູງ ບົນຫລັກການເສີມຂະຫຍາຍສິດປະຊາທິປະໄຕ ແລະ ການເປັນຕົວແທນໃນການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນຊາວແຂວງຜົ້ງສາລີ ແລະ ການປະກອບສ່ວນຂອງອົງການປົກຄອງແຂວງ, ອົງການຕຸລາການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເປັນເຈົ້າການຂຶ້ນລາຍງານ, ຊີ້ແຈງຕໍ່ກັບບັນຫາທາງສຽງສັງຄົມທີ່ໃຫ້ສົນໃຈຕໍ່ການຄຸ້ມຄອງເສດຖະກິດ-ສັງຄົມ ຂອງອົງການບໍລິຫານລັດ ແລະ ຄວາມເອົາໃຈໃສ່ຈາກທຸກພາກສ່ວນດັ່ງກ່າວ ເຮັດໃຫ້ສາມາດພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງດັ່ງນີ້:

1). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການສະເໜີຍົກຍ້າຍທ່ານ ນາງ ດວງຈັນ ຊາມູນຕີ ສະມາຊິກອົງການປົກຄອງແຂວງ ໄປຮັບໜ້າທີ່ຢູ່ແຂວງວຽງຈັນ;

2). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການສະເໜີແຕ່ງຕັ້ງທ່ານ ສົມຈິດ ສິດທິວົງ ເປັນຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງຜົ້ງສາລີ;

3). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022;

4). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022;

5). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການປັບປຸງຄຸນນະພາບລະບົບການຮຽນ-ການສອນ ໃນທຸກຂັ້ນທຸກສາຍໃນໄລຍະໃໝ່;

6). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II;

7). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການເພີ່ມທະວີໃນການສະກັດກັ້ນ, ຕ້ານ ແລະ ແກ້ໄຂບັນຫາຢາເສບຕິດຢູ່ແຂວງຜົ້ງສາລີ;

8). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການສ້າງກອງທຶນພັດທະນາກິລາກາຍະກຳຂອງແຂວງ;

9). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດລາຄາຫົວໜ່ວຍຜົນກະທົບຈາກໂຄງການພັດທະນາພື້ນຖານໂຄງລ່າງຢູ່ແຂວງຜົ້ງສາລີ;

10). ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຈັດງານບຸນປະເພນີ ຢູ່ແຂວງຜົ້ງສາລີ;

ໃນຕອນທ້າຍ, ທ່ານ ທອງສີ ເສົາລຸລິພົມ ໄດ້ຕີລາຄາສູງຕໍ່ການດຳເນີນກອງປະຊຸມ ໂດຍສະເພາະຕໍ່ກັບບັນດາເນື້ອໃນທີ່ນຳເຂົ້າພິຈາລະນາໃນກອງປະຊຸມຄັ້ງນີ້ ກອງປະຊຸມມອບໃຫ້ອົງການປົກຄອງແຂວງ ນຳເອົາຄວາມຄິດເຫັນຂອງກອງປະຊຸມ ໄປພິຈາລະນາເພື່ອສືບຕໍ່ປັບປຸງ, ແກ້ໄຂບັນດາບັນຫາທີ່ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ກັບສູ່ສະພາບປົກກະຕິໂດຍໄວ; ພ້ອມກັນນັ້ນ, ທ່ານຍັງໄດ້ຮຽກຮອງໃຫ້ທຸກພາກສ່ວນເອົາໃຈໃສ່ຜັນຂະຫຍາຍເນື້ອໃນກອງປະຊຸມຄັ້ງນີ້ ໃຫ້ທົ່ວເຖິງ ແລະ ກວ້າງຂວາງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດຂອງຕົນ ບັນລຸຕາມບັນດາຄາດໝາຍທີ່ໄດ້ຮັບຮອງໃນຄັ້ງນີ້.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

## ຄະນະຜູ້...

ປະຊຸມຄະນະປະສານງານວຽກງານສະມາຊິກລັດຖະສະພາເພດຍິງ (WAIPA) ໃນຮູບແບບກອງປະຊຸມທາງໄກ ໂດຍການເປັນປະທານຂອງທ່ານ Hon. Kittisangahakbindit Khuon Sudary ຮອງປະທານສະພາແຫ່ງຊາດແຫ່ງຣາຊະອານາຈັກກຳປູເຈຍ, ປະທານສະມາຊິກລັດຖະສະພາເພດຍິງ (WAIPA). ກອງປະຊຸມຄັ້ງນີ້ມີ ທ່ານເລຂາທິການໃຫຍ່ໄອປາ, ບັນດາສະມາຊິກສະພາແຫ່ງຊາດຈາກບັນດາລັດຖະທີ່ເປັນສະມາຊິກໄອປາ, ຜູ້ຕາງໜ້າຈາກອົງການຜົນກະທົບຂອງສົງຄາມຕໍ່ຄວາມກ້າວໜ້າຂອງແມ່ຍິງ ໃນວາລະສັນຕິພາບ ແລະ ຄວາມປອດໄພ (AVI), ຜູ້ຕາງໜ້າຈາກສູນລັດຖະສະພາອາຊີ PCAsia ແລະ ກອງເລຂາໄອປາ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອຮັບຟັງການນຳສະເໜີບົດກ່ຽວກັບຜົນກະທົບຂອງພະຍາດໂຄວິດ-19 ຕໍ່ສິດທິ ແລະ ສຸຂະພາບຂອງແມ່ຍິງ ແລະ ປຶກສາຫາລືບົດບາດຂອງລັດຖະສະພາ ໃນການສົ່ງເສີມຄວາມສະເໝີພາບຍິງ-ຊາຍໃນການໂຕ້ຕອບ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19; ຮັບຟັງການສະເໜີບົດກ່ຽວກັບຜົນກະທົບຈາກຂໍ້ຂັດແຍ່ງ ແລະ ສົງຄາມ ຕໍ່ວາລະການສົ່ງເສີມແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ, ພ້ອມທັງປຶກສາຫາລືກ່ຽວກັບບົດບາດຂອງລັດຖະສະພາໃນວາລະສົ່ງເສີມແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ.

ພ້ອມກັນນັ້ນ, ຜູ້ແທນກອງປະຊຸມ ໄດ້ປຶກສາຫາລື ແລະ ແລກປ່ຽນຂໍ້ມູນ-ຂ່າວສານ ເຊິ່ງກັນແລະກັນ ກ່ຽວກັບການພັດທະນາແນວທາງນະວັດຕະກຳໄປສູ່ການຟື້ນຕົວແບບຍືນຍົງ ໂດຍຜ່ານການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງ, ຍົກໃຫ້ເຫັນເຖິງສິ່ງທ້າທາຍທີ່ເກີດຂຶ້ນຈາກຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຕໍ່ຊີວິດການເປັນຢູ່ຂອງແມ່ຍິງ ແລະ ເດັກຍິງ, ຕີລາຄາມາດຕະການໂຕ້ຕອບ ແລະ ກົນໄກຂອງພາກພື້ນ, ແນວທາງສືບຕໍ່ຜັນຂະຫຍາຍວາລະການສົ່ງເສີມແມ່ຍິງ, ສັນຕິພາບ, ແລະ ຄວາມໝັ້ນຄົງ ຕາມມະຕິເລກທີ 1325 ເຊິ່ງໄດ້ມີການລິເລີ່ມໂດຍສະພາຄວາມໝັ້ນຄົງສະຫະປະຊາຊາດ ໃນປີ 2000 ແລະ ເລີ່ມດຳເນີນບັນດານະໂຍບາຍເພື່ອປະຕິບັດຖະແຫລງການຮ່ວມກ່ຽວກັບວາລະການສົ່ງເສີມແມ່ຍິງ, ສັນຕິພາບ, ຄວາມໝັ້ນຄົງໃນອາຊຽນ, ຄົ້ນຄວ້າວິທີການມີສ່ວນຮ່ວມຂອງແມ່ຍິງຢ່າງສະເໝີພາບໃນດ້ານການເມືອງ ລວມທັງການເພີ່ມຈຳນວນສະມາຊິກສະພາເພດຍິງເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ AIPA ເພື່ອຮັບປະກັນໃຫ້ແກ່ການດຳເນີນກອງປະຊຸມລັດຖະສະພາເພດຍິງ (WAIPA) ເຊິ່ງຈະຈັດຂຶ້ນໃນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 43 ໃນເດືອນພະຈິກ 2022 ທີ່ຈະມາເຖິງນີ້.



# ສພຂ ຄຳມ່ວນ ເປັນເຈົ້າການຕິດຕາມ ກວດກາຕົວເລກຄາດໝາຍ ແລະ ວຽກງານຕ່າງໆ

ທ່ານ ບຸນມີ ພິມມະສອນ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ທັງເປັນປະທານ ສພຂ ຄຳມ່ວນ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ໃນວາລະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຊິ່ງທ່ານໄດ້ໃຫ້ຮູ້ ກ່ຽວກັບຜົນງານອັນພົ້ນເດັ່ນຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ກໍຄື ສພຂ ຄຳມ່ວນ ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ຮອດປັດຈຸບັນ **ໂດຍສະເພາະແມ່ນດ້ານນິຕິບັນຍັດ:** ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ເປັນຕົ້ນມາ, ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ກໍຄື ສພຂ ຄຳມ່ວນ ໄດ້ເຂົ້າຮ່ວມໃນການປະກອບຄຳຄິດເຫັນ ແລະ ພິຈາລະນາຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2021-2025) ຂອງ ສພຊ ທັງໝົດ ຈຳນວນ 96 ສະບັບ, ໃນນີ້ ສ້າງໃໝ່ 38 ສະບັບ ແລະ ປັບປຸງ 58 ສະບັບ; ພ້ອມນັ້ນ, ກໍໄດ້ປະສານສົມທົບກັບອົງການປົກຄອງແຂວງ ເພື່ອຈັດຕັ້ງການທາບທາມ, ປະກອບຄຳຄິດຄຳເຫັນໃສ່ບັນດາຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນຂອງ ສພຊ ຊຸດທີ IX ໄດ້ທັງໝົດ 25 ສະບັບ; ໄດ້ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຈຳນວນ 4 ສະບັບ, ກອງປະຊຸມສະໄໝສາມັນເທື່ອທີ 2 ຈຳນວນ 11 ສະບັບ ໃນນີ້, ສ້າງໃໝ່ 4 ສະບັບ ແລະ ປັບປຸງ 7 ສະບັບ, ສຳລັບແຜນໃນກອງປະຊຸມສະໄໝສາມັນເທື່ອທີ 3 ມີຈຳນວນ 10 ສະບັບ ໃນນີ້, ສ້າງໃໝ່ 3 ສະບັບ ແລະ ປັບປຸງ 7 ສະບັບ. ນອກຈາກນີ້, ຍັງໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງນິຕິກຳໃຕ້ກົດໝາຍ ຂອງ ສພຊ ຈຳນວນ 4 ສະບັບ ແລະ ພິຈາລະນາຮັບຮອງເອົານິຕິກຳໃຕ້ກົດໝາຍຂອງທ້ອງຖິ່ນ ໄດ້ທັງໝົດ 15 ສະບັບ ໃນນີ້, ນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ (ຂໍ້ຕົກລົງຂອງເຈົ້າແຂວງ) ມີ 2 ສະບັບ ແລະ ນິຕິກຳໃຕ້ກົດໝາຍຂອງ ສພຂ ມີ 13 ສະບັບ.



**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ທ້ອງຖິ່ນ:** ເຂົ້າຮ່ວມໃນການຄົ້ນຄວ້າປະກອບຄຳເຫັນຕໍ່ບັນຫາສຳຄັນຕ່າງໆ ທາງດ້ານການເມືອງ, ການປົກຄອງ, ດ້ານເສດຖະກິດ-ສັງຄົມ ແລະ ດ້ານການຈັດຕັ້ງ-ບຸກຄະລາກອນ ທີ່ໄດ້ພິຈາລະນາ ແລະ ຮັບຮອງໃນກອງປະຊຸມ ສພຊ ໃນນີ້, ສາມາດຮັບຮອງອອກເປັນມະຕິ 36 ສະບັບ; ໄດ້ປຶກສາຫາລືວຽກງານລະຫວ່າງຄະນະ ສສຊ ປະຈຳເຂດເລືອກຕັ້ງທົ່ວປະເທດ ຮ່ວມກັບກຳມາທິການວຽກງານ ສສຊ ກ່ຽວກັບກົງຈັກການຈັດຕັ້ງຂອງ ສພຂ ຊຸດທີ II, ກົງຈັກການຈັດຕັ້ງຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ໄດ້ພິຈາລະນາຮັບຮອງເອົາວາລະແຫ່ງຊາດ 2 ສະບັບ ເຊິ່ງເປັນບັນຫາພື້ນຖານຂອງປະເທດຊາດ ທີ່ມີຄວາມເຄັ່ງຮ້ອນ ແລະ ຮີບດ່ວນ ນັ້ນຄື: ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ເຂົ້າຮ່ວມໃນການພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ໃນກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນ ແລະ ກອງປະຊຸມຄະນະປະຈຳ ຂອງ ສພຂ ຊຸດທີ II ກ່ຽວກັບວຽກງານດ້ານການເມືອງ, ການປົກຄອງ, ດ້ານເສດຖະກິດ-ສັງຄົມ ແລະ ດ້ານການຈັດຕັ້ງ-ບຸກຄະລາກອນເຊິ່ງສາມາດອອກມະຕິຮັບຮອງໄດ້ 20 ສະບັບ.

**ດ້ານການຕິດຕາມກວດກາ:** ໃນໄລຍະຜ່ານມາ ເຖິງແມ່ນຢູ່ໃນເງື່ອນໄຂສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ກໍຕາມ ແຕ່ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ກໍຄື ສພຂ ຄຳມ່ວນ ໄດ້ພະຍາຍາມເອົາໃຈໃສ່ຕິດຕາມກວດກາດ້ວຍຮູບການຕ່າງໆທີ່ສອດຄ່ອງກັບການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ສະແດງອອກ ຄື:

1) ໄດ້ສົມທົບກັບຄະນະປະຈຳ ສພຂ ໄດ້ຊີ້ນຳບັນດາຄະນະກຳມະການຂອງ ສພຂ ເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາບັນດາຕົວເລກຄາດໝາຍ, ວຽກງານຕ່າງໆ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ເປັນຕົ້ນແມ່ນບັນດາໂຄງການລົງທຶນຂອງລັດ, ການຜະລິດເປັນສິນຄ້າ, ການຈັດເກັບລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ຂອງແຂວງ, ບັນດາຕົວເລກເປົ້າໝາຍສະຫະສະຫວັດເພື່ອການພັດທະນາແບບຍືນຍົງ (SDGs) ໃນຂົງເຂດວັດທະນະທຳ-ສັງຄົມ, ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຕາມທີ່ໄດ້ກຳນົດໄວ້ມະຕິກອງປະຊຸມ ສພຂ ຄຳມ່ວນ ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ;

2) ໄດ້ເອົາໃຈໃສ່ໃນການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍຂອງແຂວງ ໃນນັ້ນແມ່ນໄດ້ລົງເລິກຕໍ່ການຈັດຕັ້ງປະຕິບັດວຽກງານຂອງເຈົ້າໜ້າທີ່ ຢູ່ໃນຂົງເຂດຕຸລາການ, ອົງການສືບສວນສອບສວນ, ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໂດຍຕິດພັນກັບວຽກງານຊຸກຍູ້ການປັບປຸງຄະນະຊີ້ນຳ ແລະ ກອງເລຂາຊ່ວຍວຽກຄະນະປົກປ້ອງກົດໝາຍຂັ້ນເມືອງ ແລະ ອົງການທີ່ກ່ຽວຂ້ອງອື່ນໆ ເພື່ອເຮັດໃຫ້ອົງການລັດ, ສັງຄົມ ມີຄວາມເຂັ້ມແຂງ ແລະ ຖືກຄຸ້ມຄອງດ້ວຍລະບຽບກົດໝາຍ;

3) ໃນດ້ານການແກ້ໄຂຜົນຂອງການຕິດຕາມກວດກາ ເພື່ອຮັບປະກັນໃຫ້ມີຜົນສັກສິດໃນການຈັດຕັ້ງປະຕິບັດ ຄະນະປະຈຳ ສພຂ ກໍໄດ້ສະເໜີມາດຕະການຕ່າງໆ ໃນການແກ້ໄຂບັນຫາຮ່ວມກັນ ເຊັ່ນ: ການອອກມະຕິຮັບຮອງໃນກອງປະຊຸມຂອງຄະນະປະຈຳ ສພຂ , ການປະສານງານຮ່ວມລະຫວ່າງກຳມະການ ທີ່ກ່ຽວຂ້ອງຂອງ ສພຂ ກັບບັນດາຂະແໜງການຂອງແຂວງ, ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຊີ້ແຈງ ແລະ ລາຍງານເປັນລາຍລັກອັກສອນໃນແຕ່ລະໄລຍະ; ນອກຈາກນີ້, ຄະນະປະຈຳ ສພຂ ຍັງໄດ້ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ພົນລະເມືອງ ທັງໝົດ 28 ຄັ້ງ, ໄດ້ຮັບຄຳຮ້ອງທຸກທັງໝົດ 45 ເລື່ອງ, ໄດ້ຄົ້ນຄວ້າພິຈາລະນາ ແລະ ນຳສົ່ງພາກສ່ວນກ່ຽວຂ້ອງ ຈຳນວນ 43 ເລື່ອງ, ກຳລັງຄົ້ນຄວ້າ ຈຳນວນ 2 ເລື່ອງ. ໃນນີ້, ເປັນຄຳຮ້ອງຂໍຄວາມເປັນທຳ 8 ເລື່ອງ ຄົ້ນຄ້ວາພິຈາລະນາແລ້ວ 6 ເລື່ອງ, ກຳລັງສືບຕໍ່ 2 ເລື່ອງ; ຄຳສະເໜີ 37 ເລື່ອງ ຄົ້ນຄວ້າພິຈາລະນາແລ້ວ 37 ເລື່ອງ.

ປະທານຄະນະ ສສຊ ຍັງໃຫ້ຮູ້ຕື່ມວ່າ: ຜົນສຳເລັດໃນການເຜີຍແຜ່ ແລະ ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມ ສພຊ-ມະຕິກອງປະຊຸມ ສພຂ ແລະ ນິຕິກຳໃຕ້ກົດໝາຍຂອງ ສພຂ: ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II, ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ໄດ້ສົມທົບກັບຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ລົງຈັດຕັ້ງຜັນຂະຫຍາຍເຜີຍແຜ່ຜົນສຳເລັດກອງປະຊຸມຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ມາຮອດປັດຈຸບັນ ໄດ້ທັງໝົດ 153 ຈຸດ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 16.164 ຄົນ ຍິງ 7.270 ຄົນ; ໄດ້ລະດົມທຶນຈາກອົງການປົກຄອງແຂວງ ນັກທຸລະກິດ, ເຄື່ອງຊ່ວຍເຫລືອຈຳນວນໜຶ່ງ ນຳພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ລົງໄປມອບໃຫ້ບັນດາເມືອງໃນທົ່ວແຂວງ ລວມມູນຄ່າທັງໝົດ 140 ລ້ານກວ່າກີບ. ນອກນັ້ນ, ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ແລະ ສສຂ ໄດ້ນຳເອົາລັດຖະທຳມະນູນກົດໝາຍ, ມະຕິຂອງ ສພຊ-ສພຂ ແລະ ບັນດານິຕິກຳໃຕ້ກົດໝາຍ ລົງໄປເຜີຍແຜ່ເຊື່ອມຊຶມໃຫ້ພະນັກງານ, ທະຫານ, ຕຳຫລວດ, ພໍ່ຄ້າຊາວຂາຍ, ນັກຮຽນ, ນັກສຶກສາ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງ ໃຫ້ຮັບຮູ້ເຂົ້າໃຈແຈ້ງຍິ່ງຂຶ້ນ.

# ການເຄື່ອນໄຫວວຽກງານຂອງ ສພຂ ຜົ້ງສາລີ

(ສພຊ) ໃນຕອນເຊົ້າວັນທີ 22 ສິງຫາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດກອງປະຊຸມຄົບຄະນະ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ ໂດຍການເປັນປະທານຂອງທ່ານ ທອງສີ ເສົາລີພົມ ປະທານ ຄສຊ ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ; ມີທ່ານ ຄຳຜອຍ ວັນນະສານ ເຈົ້າແຂວງແຂວງຜົ້ງສາລີ, ຮອງເຈົ້າແຂວງ, ສສຊ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ມີຕາງໜ້າຈາກສະມາຊິກອົງການປົກຄອງແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ອົງການພັກ-ລັດ, ອົງການລັດທຽບເທົ່າຂັ້ນແຂວງ ແລະ ພະນັກງານຊ່ວຍວຽກຄະນະ ສສຂ ປະຈຳເມືອງເຂົ້າຮ່ວມ.



ທີ່ກອງປະຊຸມໄດ້ຮັບຟັງທ່ານ ສົມຈິດ ທັບລະກອນ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ ຜ່ານບົດສະຫລຸບຕີລາຄາການເຄື່ອນໄຫວວຽກງານ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ຮັບຟັງທ່ານນາງ ຈັນມະນີ ດວງພາສຸກ ສສຊ ປະຈຳເຂດເລືອກຕັ້ງ ຂຶ້ນເຜີຍແຜ່ແຜນດຳເນີນງານຂອງຄະນະ ສສຊ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ໄລຍະ 5 ປີ (2021-2025); ເຜີຍແຜ່ຂໍ້ກຳນົດວ່າດ້ວຍແບບແຜນວິທີເຮັດວຽກຂອງປະທານ, ຮອງປະທານຄະນະ ສສຊ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ; ເຜີຍແຜ່ຂໍ້ກຳນົດວ່າດ້ວຍທີ່ຕັ້ງພາລະບົດບາດ ແລະ ການເຄື່ອນໄຫວວຽກງານຂອງຄະນະ ສສຊ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ຜັດປ່ຽນກັນປະກອບຄຳເຫັນຕໍ່ເນື້ອໃນດັ່ງກ່າວ ຢ່າງກົງໄປກົງມາ ເພື່ອຮັບປະກັນໃຫ້ເນື້ອໃນມີຄວາມອຸດົມສົມບູນ ທັງຮັບປະກັນໃຫ້ແຜນການເຄື່ອນໄຫວວຽກງານ 6 ທ້າຍປີ ຂອງ ຄສຊ ປະຈຳເຂດເລືອກຕັ້ງ 2 ຖືກຕ້ອງ, ສອດຄ່ອງກັບສະພາບໃນປັດຈຸບັນ.

ຕອນທ້າຍກອງປະຊຸມ, ປະທານກອງປະຊຸມສັງລວມຄືນຜົນຂອງກອງປະຊຸມຄັ້ງນີ້ ເຊິ່ງທ່ານກໍໄດ້ຕີລາສູງຕໍ່ການເຄື່ອນໄຫວວຽກຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ເປັນຕົ້ນແມ່ນດ້ານດີ ຜົນສຳເລັດ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ທີ່ໄດ້ເອົາໃຈໃສ່ໃນການເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ.

ຕອນບ່າຍວັນດຽວກັນນີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ໄດ້ຈັດກອງປະຊຸມປະຖົມນິເທດໃຫ້ແກ່ ສສຂ ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອ 3 ຂອງ ສພຂ ຊຸດທີ II ໂດຍການເປັນປະທານຂອງທ່ານ ທອງສີ ເສົາລີພົມ ປະທານ ສພຂ; ມີ ສສຊ ປະຈຳເຂດເລືອກຕັ້ງທີ 2, ສສຂ ແລະ ພະນັກງານຊ່ວຍວຽກຄະນະ ສສຂ ປະຈຳເມືອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ກໍເພື່ອເຜີຍແຜ່, ເຊື່ອມຊຶມນິຕິກຳທີ່ສຳຄັນ ແລະ ສ້າງຄວາມເຂົ້າໃຈ, ເອກະພາບຕໍ່ບັນດານິຕິກຳທີ່ນຳມາເຜີຍແຜ່ເຊື່ອມຊຶມຄັ້ງນີ້ ເພື່ອຮັບປະກັນໃຫ້ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ບັນລຸຕາມແຜນການທີ່ໄດ້ກຳນົດ, ລວມທັງຮັບປະກັນໃຫ້ບັນຍາກາດການດຳເນີນກອງປະຊຸມມີຄວາມຟົດຟື້ນ, ບົນຫລັກການເສີມຂະຫຍາຍສິດປະຊາທິປະໄຕຂອງບັນດາ ສສຂ ແລະ ມີເນື້ອໃນຮັດກຸມ, ສອດຄ່ອງຕາມລະບຽບກົດໝາຍ.

ທີ່ກອງປະຊຸມໄດ້ຮັບຟັງທ່ານ ນາງ ພອນສະຫວັນ ສັກດີຄຸນ ເລຂາທິການ ສພຂ, ຫົວໜ້າກອງເລຂາກອງປະຊຸມ ຂຶ້ນຜ່ານມະຕິວ່າດ້ວຍການດຳເນີນກອງປະຊຸມສະພາປະຊາຊົນແຂວງ (ສະບັບປັບປຸງປີ 2021) ສະບັບເລກທີ 307/ຄປຈຂ, ລົງວັນທີ 27 ທັນວາ 2021 ແລະ ມະຕິວ່າດ້ວຍການປະເມີນຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນ ທີ່ມາລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມໃນກອງປະຊຸມ ສພຂ ສະບັບເລກທີ 310/ຄປຈຂ, ລົງວັນທີ 31 ທັນວາ 2021. ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ແລກປ່ຽນຄວາມເຫັນຕໍ່ບັນດາເນື້ອໃນທີ່ມາເຜີຍແຜ່ໃນຄັ້ງນີ້ ເພື່ອຄວາມເປັນກະພາບຕໍ່ບາງເນື້ອໃນທີ່ຍັງບໍ່ສອດຄ່ອງ, ໂລ່ງລ່ຽນ.

ໃນວັນດຽວກັນ, ຄອບຄົວທ່ານ ວີສອນ ລາວເມົາ ໄດ້ນຳເອົາປັດໃຈ ຈຳນວນ 5 ລ້ານກີບ ແລະ ເສື້ອໂປໂລ ຈຳນວນ 30 ຊຸດ ມູນຄ່າ 3,9 ລ້ານກີບ ມອບໃຫ້ກັບ ສພຂ ແລະ ພະແນກພະລັງງານ ແລະ ບໍ່ແຮ່ແຂວງຜົ້ງສາລີ ມອບໂສລະເຊວ (solar cells) ຈຳນວນ 20 ຊຸດ ພ້ອມຕິດຕັ້ງອຸປະກອນດັ່ງກ່າວອ້ອມແອ້ມອາຄານ ສພຂ ມູນຄ່າ 39,5 ລ້ານກີບ ເພື່ອເປັນປະກອບສ່ວນໃຫ້ກັບການ ສພຂ ນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງ ສພຂ ກໍຄື ສສຊ ປະຈຳເຂດເລືອກຕັ້ງທີ 2 ແລະ ສສຂ.

ໃນພິທີ, ຕາງໜ້າໃຫ້ຄອບຄົວກ່າວມອບໂດຍທ່ານ ວີສອນ ລາວເມົາ ແລະ ຕາງໜ້າໃຫ້ພະແນກພະລັງ ແລະ ບໍ່ແຮ່ແຂວງ ກ່າວມອບໂດຍທ່ານ ຍິນໄຊ ດວງພະຈັນ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ຕາງໃຫ້ ສພຂ ກ່າວຮັບໂດຍທ່ານ ທອງສີ ເສົາສຸລີພົມ ປະທານ ສພຂ;

ໂອກາດດັ່ງກ່າວ, ເພື່ອສະແດງຄວາມຮູ້ບຸນຄຸນ ແລະ ສະແດງຂອບໃຈຕໍ່ການຊ່ວຍເຫລືອ ສພຂ ໃນຄັ້ງນີ້, ທ່ານ ທອງສີ ເສົາສຸພົມ ຕາງໜ້າ ສພຂ ໄດ້ກ່າວມອບໃບກຽດຕິຄຸນ ໃຫ້ກັບຄອບຄົວທ່ານ ວີສອນ ລາວເມົາ ແລະ ພະແນກພະລັງ ແລະ ບໍ່ແຮ່ແຂວງອີກດ້ວຍ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)



# ປາຖະກະຖາວັນສ້າງຕັ້ງລັດຖະທຳມະນູນແຫ່ງ ສປປລາວ ຄົບຮອບ 31 ປີ ແລະ ມູນເຊື້ອວັນສ້າງຕັ້ງສານປະຊາຊົນ ຄົບຮອບ 40 ປີ



(ສພຊ) ພິທີປາຖະກະຖາວັນລັດຖະທຳມະນູນແຫ່ງ ສປປລາວ ຄົບຮອບ 31 ປີ (15 ສິງຫາ 1991-15 ສິງຫາ 2022) ແລະ ມູນເຊື້ອວັນສ້າງຕັ້ງສານປະຊາຊົນຄົບຮອບ 40 ປີ (15 ສິງຫາ 1982-15 ສິງຫາ 2022) ໄດ້ຈັດຂຶ້ນທີ່ສະໂມສອນໃຫຍ່ຂອງແຂວງຄຳມ່ວນ ໂດຍການເຂົ້າຮ່ວມ ແລະ ປາຖະກະຖາຂອງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ, ເຂົ້າຮ່ວມມີພະນັກງານອາວຸໂສບຳນານ, ບັນດາເມືອງ, ພະແນກການ ແລະ ພະນັກງານວິຊາການຈາກພາກສ່ວນຕ່າງໆ ອ້ອມຂ້າງແຂວງເຂົ້າຮ່ວມ.

ທ່ານ ບຸນມີ ພິມມະສອນ ໄດ້ຍົກໃຫ້ເຫັນປະຫວັດຄວາມເປັນມາຂອງວັນສ້າງຕັ້ງລັດຖະທຳມະນູນ ໂດຍສະເພາະແມ່ນສະພາບແວດລ້ອມແຫ່ງການກຳເນີດ ລັດຖະທຳມະນູນຂອງ ສປປລາວ ພາຍຫລັງປະເທດຊາດໄດ້ຮັບການສະຖາປະນາເປັນ ສປປລາວ ພັກໄດ້ວາງແນວທາງ ແລະ ນຳພາປະຊາຊົນປະຕິບັດສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ. ປີ 1986 ພັກໄດ້ວາງແນວທາງປ່ຽນແປງໃໝ່ຮອບດ້ານ ໂດຍເລີ່ມຈາກການປ່ຽນແປງທາງດ້ານເສດຖະກິດ, ຫັນຈາກການຄຸ້ມຄອງລວມສູນບໍລິຫານເກືອກູນໄປສູ່ການຄຸ້ມຄອງຕາມກົນໄກຕະຫລາດທີ່ມີການໄລ່ລຽງເສດຖະກິດ ແລະ ມີການດັດສົມຂອງລັດ. ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການແຫ່ງການປ່ຽນແປງໃຫມ່ດັ່ງກ່າວຈຶ່ງມີຄວາມຈຳເປັນຕ້ອງຫັນໄປສູ່ການຄຸ້ມຄອງລັດດ້ວຍລັດຖະທຳມະນູນ ແລະ ກົດຫມາຍຢ່າງເປັນເອກະພາບ. ດ້ວຍເຫດນັ້ນກອງປະຊຸມເທື່ອທີ 6 ຂອງສະພາປະຊາຊົນສູງສຸດ ຊຸດທີ II (ປີ 1991) ຈຶ່ງໄດ້ພິຈາລະນາຮັບຮອງເອົາລັດຖະທຳມະນູນສະບັບທຳອິດຂອງ ສປປລາວ ເຊິ່ງໄດ້ປະກາດໃຊ້ໃນວັນທີ 15/8/1991.

ໃນໂອກາດດຽວກັນ, ທ່ານກໍໄດ້ຍົກໃຫ້ເຫັນມູນເຊື້ອ 40 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສານປະຊາຊົນແຫ່ງ ສປປລາວ ເປັນຕົ້ນແມ່ນການປັບປຸງການຈັດຕັ້ງ ແລະ ການດຳເນີນຄະດີຂອງສານປະຊາຊົນແຕ່ລະໄລຍະໄດ້ເຮັດໃຫ້ການຈັດຕັ້ງຂອງສານ ປະຊາຊົນມີການປ່ຽນແປງ, ເຕີບໃຫຍ່ຂະຫຍາຍຕົວ ແລະ ພັດທະນາຂຶ້ນຢ່າງບໍ່ຢຸດຢັ້ງ, ປັດຈຸບັນ ການຈັດຕັ້ງຂອງສານປະຊາຊົນໃນທົ່ວປະເທດ ປະກອບດ້ວຍ: ສານປະຊາຊົນສູງສຸດ 1 ແຫ່ງ, ສານປະຊາຊົນພາກ 3 ແຫ່ງ, ສານປະຊາຊົນແຂວງ, ນະຄອນຫລວງ 18 ແຫ່ງ ແລະ ສານປະຊາຊົນເຂດ 45 ແຫ່ງ, ສານທະຫານ 4 ແຫ່ງ. ສັງລວມແລ້ວອັນທີ່ພົ້ນເດັ່ນໃນການປັບປຸງ ແລະ ພັດທະນາລະບົບສານປະຊາຊົນ, ສານປະຊາຊົນທ້ອງຖິ່ນໃຫ້ຂຶ້ນກັບສາຍຕັ້ງ ຖືເປັນການພັດທະນາແບບກ້າວກະໂດດຂອງລະບົບສານປະຊາຊົນພວກເຮົາ, ການປະກາດສ້າງຕັ້ງຄະນະສານປົກຄອງຂຶ້ນໃນລະບົບສານປະຊາຊົນ ແລະ ການກໍ່ສ້າງ ແລະ ພັດທະນາບຸກ ຄະລາກອນ. ປັດຈຸບັນທົ່ວລະບົບສານມີພະນັກງານທັງຫມົດ 1.919 ທ່ານ ຍິງ 725 ທ່ານ, ໃນນີ້ ມີຜູ້ພິພາກສາ 565 ທ່ານ ຍິງ 115 ທ່ານ, ຜູ້ຊ່ວຍຜູ້ພິພາກສາ 516 ທ່ານ ຍິງ 174 ທ່ານ, ຈ່າສານ 151 ທ່ານ ຍິງ 66 ທ່ານ.

ສຳລັບແຂວງຄຳມ່ວນ ມີສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ 1 ແລະ ເຂດ 2; ດ້ານການຕັດສິນ, ພິພາກສາຄະດີ ໄດ້ເອົາໃຈໃສ່ປັບປຸງແບບແຜນກົນໄກການດຳເນີນຄະດີໃຫ້ມີຄວາມວ່ອງໄວ, ຈັດວາງຜູ້ພິພາກສາໃຫ້ມີຄວາມເໝາະສົມ ຜ່ານການຈັດຕັ້ງປະຕິບັດຕົວຈິງເຮັດໃຫ້ການພິຈາລະນາຕັດສິນຄະດີ ມີຄວາມວ່ອງໄວ ແລະ ມີຄຸນນະພາບນັບມື້ນັບສູງຂຶ້ນ ສະແດງອອກ 5 ປີຜ່ານມາ ມີຄະດີເຂົ້າມາສານປະຊາຊົນ 44.521 ເລື່ອງ, ຄ້າງມາ 1.606 ເລື່ອງ, ລວມທັງຫມົດ 46.127 ເລື່ອງ, ແກ້ໄຂໄດ້ 43.559 ເລື່ອງເທົ່າກັບ 94,43%, ແຜນການກຳນົດ 85% ຖືວ່າລື່ນແຜນການກຳນົດ 9,43%. ຍັງຄ້າງ 2.568 ເລື່ອງເທົ່າກັບ 5,56%, ຜ່ານການຕັດສິນ, ພິພາກສາຄະດີດັ່ງກ່າວ ເຫັນໄດ້ວ່າຄູ່ຄວາມພໍໃຈຕໍ່ຜົນການຕັດສິນ, ພິພາກສາຄະດີຂອງສານຫລາຍຂຶ້ນ ໂດຍສະເພາະແມ່ນຄະດີອາຍາ ຄູ່ຄວາມພໍໃຈຕໍ່ຜົນຂອງການຕັດສິນ ສົ່ງໄປຈັດຕັ້ງປະຕິບັດ 21.406 ເລື່ອງ ກວມເອົາ 92,63 % ຂອງຄະດີອາຍາທີ່ສານຂັ້ນຕົ້ນໄດ້ຕັດສິນ, ຄະດີແພ່ງ 5.517 ເລື່ອງ ກວມເອົາ 70,55% ຂອງຄະດີແພ່ງທີ່ສານຂັ້ນຕົ້ນໄດ້ຕັດສິນ.

ຜ່ານການຈັດຕັ້ງປະຕິບັດຕົວຈິງເຮັດໃຫ້ການພິຈາລະນາຕັດສິນຄະດີ ມີຄວາມວ່ອງໄວ ແລະ ມີຄຸນນະພາບນັບມື້ນັບສູງຂຶ້ນ ສະແດງອອກ 5 ປີຜ່ານມາ ມີຄະດີເຂົ້າມາສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ 1 ແລະ ເຂດ2 ຈຳນວນ 1.177 ເລື່ອງ, ແກ້ໄຂໄດ້ 1.150 ເລື່ອງເທົ່າກັບ 97,70%, ແຜນການກຳນົດ 85% ຖືວ່າລື່ນແຜນການກຳນົດ 12,70%. ຂໍອຸທອນ 94 ເລື່ອງ, ຂໍລົບລ້າງ 45 ເລື່ອງ, ຍັງຄ້າງ 27 ເລື່ອງ.

ຕະຫລອດໄລຍະ 40 ປີຜ່ານມາ, ສານປະຊາຊົນໄດ້ຮັບການປັບປຸງກໍ່ສ້າງນັບມື້ນັບເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ, ຕັ້ງໜ້າປະຕິບັດໜ້າທີ່ການເມືອງດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດເປັນກ້າວໆ ມາເຮັດໃຫ້ໄດ້ຮັບຄວາມເຄົາລົບເຊື່ອຖືຈາກປະຊາຊົນ ແລະ ໄດ້ຮັບຄວາມໄວ້ວາງໃຈຈາກພັກ-ລັດ ເປັນຢ່າງດີ, ມີຜົນງານຫລາຍດ້ານ.

# ຍົກສູງຂີດຄວາມສາມາດໃຫ້ ສພຂ, ພະນັກງານຊ່ວຍວຽກ ແລະ ລັດຖະກອນ ສພຂ ວຽງຈັນ



(ສພຊ) ໃນລະຫວ່າງວັນທີ 18-19 ສິງຫາ 2022 ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ຈັດກອງປະຊຸມເຝິກອົບຮົມການຕິດຕາມກວດການການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ, ການພິຈາລະນາຂອງສະພາແຫ່ງຊາດ ແລະ ສພຂ ກ່ຽວກັບການຮັບຮອງແຜນການລົງທຶນຂອງລັດທີ່ຕິດພັນກັບວຽກງານຕິດຕາມກວດກາໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ), ພະນັກງານຊ່ວຍວຽກປະຈຳເຂດເລືອກຕັ້ງເມືອງ ແລະ ພະນັກງານ-ລັດຖະກອນຂອງ ສພຂ ວຽງຈັນ ຊຸດທີ II ທີ່ສະໂມສອນຫ້ອງວ່າການເມືອງກາສີ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ລຳໄມ ກູດລາວົງ ຄະນະປະຈຳພັກແຂວງ, ຮອງປະທານ ສພຂ, ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ໂດຍການເປັນປະທານຮ່ວມຂອງໂດຍທ່ານ ສີທົນ ແສງພະຈັນ ເຈົ້າເມືອງກາສີ, ມີບັນດາສະມາຊິກສະພາແຫ່ງຊາດ (ສສຊ), ສສຂ ປະຈຳເຂດເລືອກຕັ້ງ 11 ເມືອງ, ວິທະຍາກອນຈາກສູນກາງ, ພະແນກແຜນການ ແລະ ການລົງທຶນແຂວງ ແລະ ພະແນກການເງິນແຂວງ, ຄະນະເລຂາທິການສະພາປະຊາຊົນແຂວງ, ພະນັກງານຈາກສະພາແຫ່ງຊາດ ຜູ້ຕາງໜ້າຈາກອົງການເຊກາ (CEGGA), ຜູ້ຊ່ວຍສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ 11 ເມືອງ ຂອງແຂວງ ຕະຫລອດຮອດພະນັກງານພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມເຝິກອົບຮົມຄັ້ງນີ້, ກໍເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ ສສຂ ຊຸດທີ II ພະນັກງານຊ່ວຍວຽກປະຈຳເຂດເລືອກຕັ້ງເມືອງ ແລະ ລັດຖະກອນ ສພຂ ວຽງຈັນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ-ສສຂ ແລະ ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການຈັດສັນການລົງທຶນຂອງທຶນຂອງລັດ, ແຜນງົບປະມານແຫ່ງລັດໃນແຕ່ລະປີຕິດພັນກັບການເຂົ້າຮ່ວມແຕ່ຫົວທີ, ການຕິດຕາມກວດກາວິທີການເປັນການພິຈາລະນາ ແລະ ຮັບຮອງເອົາບັນຫາທີ່ສຳຄັນຕ່າງໆທີ່ນຳເຂົ້າໃນກອງປະຊຸມສະໄໝສາມັນ ໃຫ້ມີຄວາມເປັນເອກະພາບ.

ກອງປະຊຸມໄດ້ນຳເອົາບັນດາຫົວຂໍ້, ເນື້ອໃນເອກະສານທີ່ສຳຄັນ ຄື: ການພິຈາລະນາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກ່ຽວກັບການຮັບຮອງແຜນງົບປະມານແຫ່ງລັດໃນແຕ່ລະປີຕິດພັນກັບການເຂົ້າຮ່ວມແຕ່ຫົວທີ ແລະ ການຕິດຕາມກວດກາ; ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານ; ຫລັກການໃນການພິຈາລະນາການຈັດສັນແຜນການລົງທຶນຂອງລັດ ປະຈຳປີ ຂອງແຂວງທີ່ຕິດພັນກັບການເຂົ້າຮ່ວມແຕ່ຫົວທີ ແລະ ການຕິດຕາມກວດກາ; ຫລັກການໃນການຈັດສັນແຜນງົບປະມານແຫ່ງລັດປະຈຳປີຂອງແຂວງ.

ກອງປະຊຸມໄດ້ດຳເນີນໄປຢ່າງຟົດຟື້ນ ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມມີຄວາມຕັ້ງໃຈຮັບຟັງ ແລະ ຄວາມສົນໃຈໃນແຕ່ລະຫົວຂໍ້ທີ່ນຳມາສະເໜີໄດ້ພ້ອມກັນຄົ້ນຄວ້າປຶກສາຫາລື, ແລກປ່ຽນບົດຮຽນ ແລະ ພ້ອມທັງປະກອບຄຳຄິດ-ຄຳເຫັນ ໂດຍໄດ້ຍົກໃຫ້ເຫັນບັນຫາທີ່ເກີດຂຶ້ນຕົວຈິງຕິດພັນກັບຄວາມຮັບຜິດຊອບໃນແຕ່ລະຂົງເຂດຂອງທ້ອງຖິ່ນເພື່ອສ້າງຄວາມເປັນເອກະພາບເຮັດໃຫ້ການຈັດເຝິກອົບຮົມໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນໂດຍແຜນງານການ ມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ-CEGGA).

# ສາລະວັນ ປາຖະກະຖາ 2 ວັນປະຫວັດສາດ ແລະ ເຜີຍແຜ່ເອກະສານສຳຄັນຕ່າງໆ



(ສພຊ) ສະພາປະຊາຊົນແຂວງ (ສພຂ) ສາລະວັນ ສົມທົບກັບຄະນະໂຄສະນາອົບຮົມແຂວງສາລະວັນ ຈັດພິທີປາຖະກະຖາວັນລັດຖະທຳມະນູນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 31 ປີ (15 ສິງຫາ 1991-15 ສິງຫາ 2022) ແລະ ວັນຍຶດອຳນາດ ຄົບຮອບ 47 ປີ (23 ສິງຫາ 1975-23 ສິງຫາ 2022) ແລະ ເຜີຍແຜ່ມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ສາລະວັນ ຊຸດທີ II ຕິດພັນກັບການພົບປະຜູ້ມີສິດເລືອກຕັ້ງ ຢູ່ເທສະບານແຂວງສາລະວັນ ໃນວັນທີ 18 ສິງຫາ 2022 ຢູ່ທີ່ສະໂມສອນຂອງວິທະຍາໄລຄູສາລະວັນ ໂດຍການແມ່ນທ່ານ ຈັນສະໝອນ ພົມມະແສງ ຫົວໜ້າຄະນະໂຄສະນາອົບຮົມແຂວງ ປາຖະກະຖາ 2 ວັນປະຫວັດສາດດັ່ງກ່າວ ແລະ ເຜີຍແຜ່ມະຕິຂອງກອງປະຊຸມໂດຍທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ແລະ ທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານ ສພຂ ສາລະວັນ; ເຂົ້າຮ່ວມຮັບຟັງມີບັນດາທ່ານຕາງໜ້າຈາກພະແນກການອ້ອມຂ້າງແຂວງ, ກົມກອງ, ນັກສຶກສາ ແລະ ພໍ່ແມ່ປະຊາຊົນ ເຂົ້າຮ່ວມຮັບຟັງທັງໝົດເກືອບ 300 ທ່ານ.

ພິທີໃນຄັ້ງນີ້, ແມ່ນເພື່ອເປັນການໂຄສະນາ ແລະ ທວນຄືນວັນທີ່ມີຄວາມໝາຍຄວາມສຳຄັນຂອງຊາດ ໃຫ້ຖັນແຖວພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກສຶກສາ ແລະ ພໍ່ແມ່ປະຊາຊົນ ໄດ້ຮັບຮູ້ເຊື່ອມຊຶມ ຕໍ່ກັບຜົນສຳເລັດການປະກາດໃຊ້, ຄວາມເອກອ້າງທະນົງໃຈທີ່ໄດ້ມີລັດຖະທຳມະນູນ ແຫ່ງ ສປປລາວ ແລະ ເຫດການສຳຄັນທາງປະຫວັດສາດ ເປັນວັນແຫ່ງມະຫາສາມະຄີ-ຄວາມມະນາຈິດ ເປັນວັນເສຍສະຫລະຕໍ່ສູ້ ເອົາຊະນະຕໍ່ສັດຕູ ສາມາດຍຶດອຳນາດ ແລະ ສະຖາປະນາ ເປັນສາທາລະນະລັດປະຊາທິປະໄຕ ປະຊາຊົນລາວຢ່າງເປັນທາງການ ທັງເປັນໂອກາດທີ່ສຳຄັນໃຫ້ຜູ້ແທນປະຊາຊົນ ໄດ້ພົບປະຢ້ຽມຢາມຖາມຂ່າວຜູ້ມີສິດເລືອກຕັ້ງ ແລະ ໂຄສະນາເຜີຍແຜ່ ປຸກລະດົມໃຫ້ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມໃນການປະຕິບັດແນວທາງນະໂຍບາຍພັກ-ລັດ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມຕ່າງໆທີ່ສຳຄັນຂອງສະພາແຫ່ງຊາດ ແລະ ສພຂ, ລາຍງານຜົນການເຄື່ອນໄຫວວຽກງານຕໍ່ປະຊາຊົນ ໃນເຂດເລືອກຕັ້ງຂອງຕົນ, ເກັບກຳ ແລະ ນຳເອົາຄວາມຄິດຄວາມເຫັນເພື່ອນຳສະເໜີພາກສ່ວນທີ່ກ່ຽວຂ້ອງຫາທາງແກ້ໄຂ.

(ດີລຳພົນ ພົມມະຈັນ)



## ສຸກສະບາຍຫາຍໂຣຄາ

# ອາຫານທີ່ມີທາດແຄລຊຽມ ຫລາຍກວ່ານົມ

**ແປ ແລະ ຮຽບຮຽງໂດຍ: ສ.ສາຍນ້ຳທາ**

ເມື່ອຫລາຍທ່ານນຶກເຖິງຄວາມຕ້ອງການທາດແຄລຊຽມ (Calcium) ຕໍ່ຮ່າງກາຍແລ້ວກໍມັກຈະຄິດອອກແຕ່ນ້ຳນົມຈອກໃຫຍ່ໆ ແຕ່ຄວາມຈິງແລ້ວ ທາດແຄລຊຽມຍັງມີຢູ່ນຳປະເພດພືດຜັກ ຈຳນວນຫລາຍເຊັ່ນກັນ.

ກ່ອນອື່ນທ່ານຮູ້ບໍ່ວ່າ ຮ່າງກາຍຄົນເຮົານັ້ນ ຕ້ອງການທາດແຄລຊຽມຕໍ່ມື້ຫລາຍເທົ່າໃດ? ຕາມການຄົ້ນຄວ້າທາງການແພດແລ້ວ ຜູ້ທີ່ມີອາຍຸລະຫວ່າງ 9-18 ປີ ມີຄວາມຕ້ອງການທາດແຄລຊຽມ 1.300 ກຣາມຕໍ່ມື້, ຜູ້ທີ່ມີອາຍຸລະຫວ່າງ 19-50 ປີ ຕ້ອງການທາດແຄລຊຽມ 1.000 ກຣາມຕໍ່ ມື້ ແລະ ຜູ້ທີ່ມີອາຍຸກາຍ 50 ປີຂຶ້ນເມືອແມ່ນຄວນໄດ້ຮັບທາດແຄລຊຽມມື້ລະ 1.200 ກຣາມ.

ການກິນອາຫານທີ່ດີ ມີທາດແຄລຊຽມນັ້ນ ບໍ່ສະເພາະແຕ່ເຮັດໃຫ້ຮ່າງກາຍຂອງເຮົາແຂງແຮງ, ຊ່ວຍໃຫ້ກະດູກ ແລະ ແຂ້ວເຮົາເຂັ້ມແຂງ ແຕ່ມັນຍັງຊ່ວຍໃຫ້ລະບົບການໄຫລວຽນຂອງເລືອດ, ລະບົບປະສາດ ແລະ ກ້າມເນື້ອເຮັດໜ້າທີ່ໄດ້ດີ ເພາະສະນັ້ນ ພວກເຮົາຈະໄດ້ຮັບທາດແຄລຊຽມນັ້ນມາຈາກໃສແດ່ ຖ້າບໍ່ແມ່ນມາຈາກນ້ຳນົມ? ອີງຕາມຂໍ້ມູນ ຂອງເວັບໄຊ Healthdigezt ໃຫ້ຮູ້ວ່າ ມາຮອດປັດຈຸບັນ ການດື່ມນ້ຳນົມ ອາດບໍ່ແມ່ນທາງເລືອກດຽວແລ້ວ ທີ່ພວກເຮົາຈະໄດ້ຮັບທາດແຄລຊຽມ, ນັກວິທະຍາສາດຄົ້ນພົບວ່າ ມີພືດບາງຈຳພວກທີ່ໃຫ້ທາດແຄລຊຽມແກ່ພວກເຮົາຫລາຍກວ່ານົມດ້ວຍຊ້ຳ ເຊິ່ງພືດເຫລົ່ານັ້ນປະກອບມີ:

**ໜຶ່ງ:** ໝາກງາ (Sesame) ເປັນແຫລ່ງຂອງແຄລຊຽມທີ່ອຸດົມສົມບູນ, ໃນໝາກ ຫລື ເມັດນ້ອຍໆຂອງງານັ້ນ ຈະປະກອບດ້ວຍແຮ່ທາດທີ່ເປັນຄຸນຄ່າທາງໂພຊະນາການສູງ ໂດຍສະເພາະ ທາດແຄລຊຽມ ໃນໝາກງາຈຳນວນເຄິ່ງຈອກ ຈະປະກອບໄປດ້ວຍທາດແຄລຊຽມ 351 ກຣາມ ເຊິ່ງຫລາຍກວ່າປະລິມານທາດແຄລຊຽມທີ່ໄດ້ຈາກນົມໜຶ່ງຈອກ ທີ່ມີທາດແຄລຊຽມພຽງແຕ່ 300 ກຣາມເທົ່ານັ້ນ. ມັນອາດເປັນການງ່າຍທີ່ຄົນລາວເຮົາສາມາດບໍລິໂພກໝາກງາ ເພາະອາຫານລາວຫລາຍປະເພດ ເພິ່ນກໍນິຍົມເມັດງາປະປົນໃສ່ ເພື່ອເພີ່ມລົດຊາດ ເຊັ່ນ: ຊຸບຜັກ, ປະເພດເຂົ້າໜົມ, ຊີ້ນສະຫວັນ, ໄຄແຜ່ນ ຫລື ອາດຈະນຳເອົາໝາກງາມາຂົ້ວ ແລ້ວກໍຕຳໃສ່ນ້ຳຕານ ແລະ ເກືອພຽງເຫລັກນ້ອຍ ກິນກັບເຂົ້າໜຽວຮ້ອນໆ ກໍມີລົດຊາດດີບໍ່ຢອກ ທັງໄດ້ຮັບທາດແຄລຊຽມຫລາຍຕື່ມອີກ.

**ສອງ:** ຜັກຫົມ (Spinach) ເປັນອີກແຫລ່ງຂອງທາດແຄລຊຽມທີ່ດີເລີດເຊັ່ນກັນ, ຫລາຍອົງເຂດ ເພິ່ນກໍນິຍົມເອົາຜັກຫົມມາປັ່ນດັ່ງໝາກໄມ້ ແລ້ວນຳເອົານ້ຳຜັກຫົມນັ້ນມາດື່ມ, ໃນໜຶ່ງຈອກ ຂອງນ້ຳຜັກຫົມ ຈະປະກອບດ້ວຍທາດແຄລຊຽມຢູ່ 244,8 ກຣາມ, ນອກຈາກແຄລຊຽມແລ້ວ ຜັກຫົມຍັງປະກອບດ້ວຍທາດມັງການີສ (Maganese) ຈຳນວນ 84% ທີ່ຮ່າງກາຍຕ້ອງການປະຈຳວັນ, ທາດດັ່ງກ່າວຊ່ວຍໃນການເຕີບໃຫຍ່ ແລະ ພັດທະນາການທາງໂຄງສ້າງຂອງກະດູກຕື່ມອີກ. ຄົນລາວເຮົາກໍນິຍົມກິນຜັກຫົມກັນຫລາຍສົມຄວນ ໂດຍສະເພາະໃຊ້ໃນການປຸງແຕ່ງອາຫານປະເພດຕ່າງໆເຊັ່ນ: ຊຸບຜັກຫົມ, ລວກຜັກຫົມກັບແຈ່ວ, ແກງຜັກຫົມໃສ່ປາ ແລະ ອື່ນໆ ທີ່ເຫັນວ່າເປັນອາຫານພື້ນບ້ານ ທີ່ເຕັມໄປດ້ວຍໂພຊະນາການ ອັນຫລາກຫລາຍ ແລະ ລາຄາບໍ່ແພງ ຫລື ສາມາດໃຊ້ເນື້ອທີ່ດິນນ້ອຍໆຂອງເຮົາປູກກິນເອງກໍເຮັດໄດ້ບໍ່ຍາກເລີຍ.

**ສາມ:** ນົມສົ້ມ (Yogurt), ທ່ານຮູ້ແລ້ວບໍ່ວ່າ ນົມສົ້ມເປັນແຫລ່ງຂອງທາດແຄລຊຽມມະຫາສານ ເພາະນົມສົ້ມພຽງຈອກດຽວ ກໍສາມາດໃຫ້ທາດແຄລຊຽມເຖິງ 447,4 ກຣາມ ເຊິ່ງນັ້ນກໍໝາຍ ຄວາມວ່າ ກວມເອົາເກືອບເຄິ່ງຂອງຈຳນວນທາດແຄລຊຽມທີ່ຮ່າງກາຍຕ້ອງການແຕ່ລະມື້ແລ້ວ, ນອກນັ້ນ ນົມສົ້ມຍັງປະກອບດ້ວຍທາດຟົດສະຟໍຣັສ (phosphorus) ທີ່ເປັນແຮ່ທາດທີ່ຄອຍເບິ່ງແຍງຮັກສາກະດູກ ແລະ ແຂ້ວຂອງເຮົາໃຫ້ສຸຂະພາບດີ.

ເມື່ອເປັນເຊັ່ນນັ້ນ ເຮົາຈຶ່ງເຫັນໄດ້ວ່າ ມີອາຫານທີ່ຫລາກຫລາຍທີ່ເປັນທາງເລືອກໃນການເສີມສ້າງຮ່າງກາຍໃຫ້ແຂງແຮງ ດ້ວຍການບໍລິໂພກອາຫານທີ່ມີໂພຊະນາການດັ່ງທາດແຄລຊຽມ, ເຮົາບໍ່ຈຳເປັນຈະໄປຊື້ນົມ ທີ່ອາດລາຄາແພງ ແລະ ປະກອບໄປດ້ວຍສານເຄມີບາງຊະນິດປະປົນຢູ່ ເພາະເຮົາຍັງມີທາງເລືອກຈາກພືດຜັກທັນຍາຫານ ທີ່ເຮົາສາມາດຊື້ດ້ວຍລາຄາບໍ່ແພງ ຫລື ແມ່ນ ແຕ່ອອກແຮງປູກກິນເອງຢູ່ສວນຄົວຫລັງເຮືອນກໍຍິ່ງເປັນທາງເລືອກທີ່ດີ.

## ສາລາກະວີ

**ບົດກະວີຈາກ ສສ.ຫວຽດນາມ**

ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນທາງການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບ ລາວ-ຫວຽດນາມ ຄົບຮອບ 45 ປີ (18/7/1977-18/7/2022)

### ຫວນຕ່າວ

**# ໂດຍ: ຫງວຽນ ບາວ ຈັນ**

❊ ກະວີສິນອ່ອນລ້າ
ເພາະຜ່ານ ວັນເວລາໝອງ
ທັງເຫລົ່າ ແສນກະສັນໄຫ້
ຄິດຮອດ ສາຍແມ່ນ້ຳ

ກໍໂງ່ຕ່າວຄືນກັບ
ໝື່ນແຫງເຫີຍແຫ້ງ
ອາໄລຫາຫິວຫອດ
ນະທີເທົ້າທ່າວໄຫລ ພຸ້ນນາ!

❊ ກະວີສິນເປັນແຫ້ງແລ້ງ
ບົດກະວີເລີຍໄລລົດ
ເພາະວ່າໃຈກະວີຄ້ອຍ
ເຫັນທົ່ມທຳມະຊາດໄມ້

ເພາະນ້ຳແຫລ່ງລະແຫງໝົດ
ຈືດຈາງຈາວນ້ຳ
ຄະນຶງຫວນເຫັນຮູບ
ລະໄມຂຶ້ນຂ່າວຂຽວ ກ່ອນນັ້ນ!

❊ ກະວີສິນຄັ່ງແຄ້ນ
ເໜັບແນບ ຫວນກັບມາ
ຄິດເມື່ອ ລົມພານໄມ້
ແສນອຸດົມຕະຫລອດໄວ້

ແສນຂົມລະທົມເຈັບ
ຕ່າວຕຶກະໃຈລົ້ນ
ໄຫວຕຶງເຢັນຂະໜາດ
ແສນສົດໃສຊື່ນຊ້ອຍ
ໃຈຂ້ອຍກໍຊື່ນບານ ນຳແລ້ວ!

❊ ກະວີສິນໄດ້ຊື່ນຊ້ອຍ
ກໍຕ່າວ ຫວນຄືນມາ
ເພາະວ່າ ຍາມຄະນຶງຄ້ອຍ
ຄວາມຊົງຈຳຢູ່ແໜ້ນ

ພອຍພາກພູມໃຈ
ຕໍ່ໃຈດວງນີ້
ເຫັນຮອຍຄາວອະດີດ
ແສນສະອື້ນອ່ອນໃຈ

❊ ເຫັນຝູງຄົນຍົກຍ້າຍ
ປຸກມຸມມອງທີ່ລືມເລືອນ
ສຽງມະຫາຊົນຍັງກ້ອງ
ນັ້ນຄື ສຽງປາກເວົ້າ

ພະລັນຍ່າງເປັນຂະບວນ
ໃຫ້ຕ່າວເຕືອນສະຕິຕັ້ງ
ຄະນອງດັ່ງຝຶດສະນັ້ນ
ກະວີຂ້ອຍຜູ້ຂຽນ ແທ້ນາ!



## ທັກທາຍ ລະບາຍ

**# ສາວຈົ້ມ**

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❊ **ສະ**ແດງຄວາມເສຍໃຈນຳ **ບິດາ ຄູບປາກດີ** ກົມສື່ມວນຊົນ ສະພາແຫ່ງຊາດ ທີ່ໄດ້ສູນເສຍຍາດທີ່ແສນເຄົາລົບຮັກ **ບິດາ**ຈອນຈາກແລ້ວ **ລາທາງບໍ່ຫວນທັບ** ແພງເອີຍ! **ຂໍແບ່ງເບົາຄວາມທຸກ** ໂສກລະທົມຄາບນີ້ ບາລະມີພໍ່ເຄີຍສ້າງ ຈົ່ງນຳທາງພໍ່ໄປສູ່ ສອງສະຫວັນຊັ້ນຟ້າ **ບ່ອນທີ່ເສົ້າບໍ່ໄດ້ຫາ ບ່ອນທີ່ປາບໍ່ໄດ້ຊື້** ຄົບເຈົ້າກ່າວຊາບ **ພຸ້ນທ້ອນ!**

❊ **ວັນ**ທີ 1 ກັນຍາເປັນ**ມື້ໄຂສົກຮຽນໃໝ່**ທົ່ວປະເທດ ເປັນເທດການຄຶກຄື້ນ ສົກຮຽນໃໝ່ໄຂພິທີ ເຕັມທີຍາມໄປ-ມາ ລົດຕິດຄາຄ້າງ ບ່າຄະໜົບຈົບບໍ່ມີບ່ອນອ້າງທາງຄົນລົດໄຕ່ ແທຍ້ກັບໄປອັ່ງແໜ້ນ ຊາມຊາຮອດບ່ອນໝາຍ ລຽນເປັນແຖວຊ້າຍລ້າຍ ເກັ່ງໃໝ່ຄັນງາມທາງສາມເລນຕັນເຕັມ ຄ່ອຍເຄື່ອນເໜັງຫຍັບຍ້າຍສ່ວນລົດຈັກກະເລີຍໄດ້ ປົນໄປຕາມທາງຍ່າງ ເພາະທາງຫລວງບໍ່ຄ່ອຍອ້າງ ພໍໃຫ້ໄຕ່ເດີນ ໝ່າຍເດ**ລົດຈັກຈົ່ມ!**

❊ **ສົ່ງ**ກຳລັງໃຈ ໃຫ້**ພໍ່ແມ່ພີ່ນ້ອງ** ປະຊາຊົນລາວບັນດາເຜົ່າ **ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ** ຢູ່ບັນດາ**ແຂວງພາກເໜືອ** ໂດຍສະເພາະ ແຂວງ**ອຸດົມໄຊ, ຫລວງພະບາງ** ແລະ **ຜົ້ງສາລີ** ຂໍໃຫ້ມີສະຕິຕັ້ງ ຜ່ານຜ່າອຸປະສັກ ບັນຫາໜັກ ຂໍແບ່ງເບົາເບົາທຸເລົາລົງ ຝາກສົ່ງໃຈເປັນຂອງຕ້ອນ ຂໍຈົ່ງອົດທົນສູ້ມີຄວາມຫວັງຕັ້ງໃຈໃໝ່ ບໍ່ຖືກໃຜກໍບໍ່ຫວນຮັບຮູ້ ອົດທົນສູ້ຜ່ານໄພ **ພີ່ນ້ອງເອີຍ!**

### ຊວນຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ໜັ້ນໃຈຮ້ອຍເປີເຊັນ**

ໃນຊົ່ວໂມງຮຽນວິຊາປັດຊະຍາ ອາຈານເວົ້າວ່າ:

**ອາຈານ:** ຄົນສະຫລາດມັກຈະສົງໄສຕະຫລອດເວລາ, ມີແຕ່ຄົນໂງ່ ເທົ່ານັ້ນ ທີ່ໝັ້ນໃຈໂຕເອງ

**ທ້າວແກ້ວຕາ:** ແມ່ນແທ້ບໍ່ ? ອາຈານໝັ້ນໃຈບໍ່ທີ່ເວົ້າມາວ່າຖືກຕ້ອງ

**ອາຈານ:** ໝັ້ນໃຈຮ້ອຍເປີເຊັນ

**ທ້າວແກ້ວຕາ:** !!!



### ຄະຕິເຕືອນໃຈ

**# ດອກຊະຍອມ**

ໄຟໄໝ້ປາ ຈຶ່ງເຫັນໜ້າໝູ
ນ້ຳຖ້ວມທູ ຈຶ່ງເຫັນໜ້າຈີ່ຫລ່

# ກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 19 (ປັບປຸງ) ພັນທະຂອງຜູ້ຜະລິດ**

ຜູ້ຜະລິດ ຜະລິດຕະພັນຢາສູບ ຢູ່ ສປປ ລາວ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;
2. ພິມຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີຜະລິດ ແລະ ຕິດສະແຕມອາກອນ ໃສ່ຊອງ, ຕຸດ, ຫີບ ຜະລິດຕະພັນຢາສູບ;
3. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບສ່ວນປະກອບ, ສ່ວນປະສົມ, ຈຳນວນ ຜະລິດຕະພັນຢາສູບຂອງແຕ່ລະຍີ່ຫໍ້, ການຕະຫຼາດຢາສູບ, ຄ່າໃຊ້ຈ່າຍໃນການຕະຫຼາດຢາສູບ ແລະ ສານທີ່ເກີດຈາກການເຜົາໄໝ້ ພ້ອມດ້ວຍຕົວຢ່າງໃຫ້ຂະແໜງການສາທາລະນະສຸກ ສອງຄັ້ງຕໍ່ປີ ເພື່ອດຳເນີນການກວດສອບ ແລະ ເປີດເຜີຍຕໍ່ປະຊາຊົນ;
4. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບໂຄງສ້າງຕົ້ນທຶນຂອງການຜະລິດຢາສູບ ແລະ ລາຍຮັບ ປະຈຳປີ ໃຫ້ຂະແໜງການການເງິນ ແລະ ຂະແໜງການອຸດສາຫະກຳ ແລະ ການຄ້າ;
5. ມອບພັນທະເຂົ້າກອງທຶນຄວບຄຸມຢາສູບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
6. ດຳເນີນທຸລະກິດຜະລິດຕະພັນຢາສູບ ຢ່າງໂປ່ງໃສ ແລະ ສາມາດກວດສອບໄດ້;
7. ປົກປັກຮັກສາສິ່ງແວດລ້ອມໃນຂອບເຂດພື້ນທີ່ການຜະລິດຂອງຕົນ;
8. ປ້ອງກັນ ແລະ ສົ່ງເສີມສຸຂະພາບຂອງຜູ້ອອກແຮງງານໃນຂະບວນການຜະລິດຢາສູບ ຕາມກົດໝາຍທີ່ກ່ຽວຂ້ອງ;
9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20 (ປັບປຸງ) ພັນທະຂອງຜູ້ນຳເຂົ້າ**

ຜູ້ນຳເຂົ້າຜະລິດຕະພັນຢາສູບ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;
2. ນຳເຂົ້າຜະລິດຕະພັນຢາສູບ ທີ່ມີຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີ ຜະລິດ, ຕິດສະແຕມພາສີໃສ່ ຊອງ, ຕຸດ, ຫີບ ຜະລິດຕະພັນຢາສູບ ຕາມກົດໝາຍ ແລະ ລະບຽບການ;
3. ມອບພັນທະເຂົ້າກອງທຶນຄວບຄຸມຢາສູບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
4. ດຳເນີນທຸລະກິດຜະລິດຕະພັນຢາສູບ ຢ່າງໂປ່ງໃສ ແລະ ສາມາດກວດສອບໄດ້;
5. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບສ່ວນປະກອບ, ສ່ວນປະສົມ, ຈຳນວນ ຜະລິດຕະພັນຢາສູບ ຂອງແຕ່ລະຍີ່ຫໍ້, ການຕະຫຼາດຢາສູບ, ຄ່າໃຊ້ຈ່າຍໃນການຕະຫຼາດ ແລະ ສານທີ່ເກີດຈາກການເຜົາໄໝ້ ພ້ອມດ້ວຍຕົວຢ່າງໃຫ້ຂະແໜງການສາທາລະນະສຸກ ສອງຄັ້ງຕໍ່ປີ ເພື່ອດຳເນີນການກວດສອບ ແລະ ເປີດເຜີຍຕໍ່ປະຊາຊົນ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 (ປັບປຸງ) ພັນທະຂອງຜູ້ຈຳໜ່າຍ ແລະ ຊື້ ຂາຍ**

ຜູ້ຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;
2. ຂໍອະນຸຍາດ ກ່ຽວກັບການຈຳໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ຮັບປະກັນໃຫ້ມີສະຖານທີ່ ທີ່ເໝາະສົມໃນການຈຳໜ່າຍ ແລະ ຊື້ຂາຍ ຜະລິດຕະພັນຢາສູບ;
4. ຂາຍຜະລິດຕະພັນຢາສູບທີ່ມີ ຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີ ຜະ ລິດ, ຕິດສະແຕມອາກອນ ແລະ/ຫຼື ສະແຕມພາສີ ຢ່າງຖືກຕ້ອງ ຕາມລະບຽບການເທົ່ານັ້ນ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 (ປັບປຸງ) ພັນທະຂອງຜູ້ຊົມໃຊ້ຜະລິດຕະພັນຢາສູບ**

ຜູ້ຊົມໃຊ້ຜະລິດຕະພັນຢາສູບ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;
2. ສູບຢາໃນສະຖານທີ່ອະນຸຍາດໃຫ້ສູບ;
3. ເຄົາລົບສິດຂອງຜູ້ບໍ່ສູບຢາ ແລະ ຜູ້ຢູ່ໃກ້ຄຽງ ດ້ວຍການບໍ່ເຮັດໃຫ້ຜູ້ອື່ນ ໄດ້ຮັບຄວັນຢາສູບຂອງຕົນ;
4. ປົກປັກຮັກສາສິ່ງແວດລ້ອມ ໂດຍບໍ່ຖິ້ມກົດ ຫຼື ກອກຢາສູບຊະຊາຍ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ໝວດທີ 3**
**ການບັນຈຸ, ການຫຸ້ມຫໍ່,**
**ຄຳເຕືອນສຸຂະພາບ ແລະ ສະຫຼາກ ຜະລິດຕະພັນຢາສູບ**

**ມາດຕາ 23 (ປັບປຸງ) ການບັນຈຸ**

ການບັນຈຸຜະລິດຕະພັນຢາສູບ ໃຫ້ບັນຈຸຊາວກອກ ຕໍ່ໜຶ່ງຊອງ, ສິບຊອງ ຕໍ່ໜຶ່ງຕຸດ ແລະ ຫ້າສິບຕຸດ ຕໍ່ໜຶ່ງຫີບ, ຍົກເວັ້ນ ຢາສູບຊີກາ ແລະ ຢາສູບອື່ນ.

ສຳລັບ ມາດຕະຖານຂອງ ຊອງ, ຕຸດ, ຫີບ ແລະ ກອກ ຢາສູບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 24 (ປັບປຸງ) ການຫຸ້ມຫໍ່**

ການຫຸ້ມຫໍ່ ຊອງ, ຕຸດ ຜະລິດຕະພັນຢາສູບ ທີ່ຜະລິດຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງ ປະເທດ ຕ້ອງປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ແລະ ມີຄຳເຕືອນສຸຂະພາບ, ສະຫຼາກ ຕາມການກຳນົດຂອງກະຊວງສາທາລະນະສຸກ.

**ມາດຕາ 25 (ປັບປຸງ) ຄຳເຕືອນສຸຂະພາບ**

ຄຳເຕືອນສຸຂະພາບ ປະກອບດ້ວຍ ຄຳເຕືອນສຸຂະພາບທີ່ເປັນ ຮູບພາບ ແລະ ຂໍ້ຄວາມ.

ຄຳເຕືອນສຸຂະພາບທີ່ເປັນຮູບພາບ ແມ່ນ ຮູບພາບທີ່ສະແດງເຖິງຜົນຮ້າຍ ຫຼື ພະຍາດທີ່ເກີດຈາກການຊົມໃຊ້ຢາສູບ, ການໄດ້ຮັບຄວັນຢາສູບມືສອງ ແລະ ຜົນສະທ້ອນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງຕ້ອງພິມໃສ່ທາງນອກເບື້ອງເທິງຂອງດ້ານໜ້າ, ຫຼັງ ແລະ ຢູ່ລຸ່ມຂໍ້ຄວາມຂອງແຕ່ລະຊອງ, ຕຸດ ໃຫ້ເຫັນໄດ້ ຢ່າງຈະແຈ້ງ ເພື່ອສະແດງໃຫ້ຜູ້ຊົມໃຊ້ຜະລິດຕະພັນຢາສູບຮັບຮູ້.

ຄຳເຕືອນສຸຂະພາບທີ່ເປັນຂໍ້ຄວາມ ແມ່ນ ຄຳເຕືອນທີ່ອະທິບາຍຄວາມໝາຍຂອງແຕ່ລະຮູບພາບ ກ່ຽວກັບຜົນຮ້າຍ ຫຼື ພະຍາດທີ່ເກີດຈາກການຊົມໃຊ້ຢາສູບ, ການໄດ້ຮັບຄວັນຢາສູບມືສອງ ແລະ ຜົນສະທ້ອນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງຕ້ອງພິມໃສ່ຂອບເທິງສຸດຂອງແຕ່ລະຊອງ, ຕຸດ ແລະ ຢູ່ດ້ານເທິງຂອງຮູບພາບ. ຄຳເຕືອນສຸຂະພາບທີ່ເປັນຂໍ້ຄວາມ ຕ້ອງພິມເປັນພາສາລາວ.

ການພິມຄຳເຕືອນສຸຂະພາບເປັນ ຮູບພາບ ແລະ ຂໍ້ຄວາມ ຕ້ອງມີຂະໜາດ, ຕຳແໜ່ງຂອງຕົວອັກສອນ, ຄ່າຄວາມເຂັ້ມຂອງສີ, ສັນຍາລັກ ແລະ ການສະແດງເຄື່ອງໝາຍການຄ້າ ຕາມລະບຽບການທີ່ກະຊວງສາທາລະນະສຸກ ວາງອອກໃນແຕ່ລະໄລຍະ.

**ມາດຕາ 26 (ປັບປຸງ) ສະຫຼາກ**

ສະຫຼາກ ແມ່ນ ຂໍ້ຄວາມທີ່ພິມໃສ່ດ້ານຂ້າງທາງນອກຂອງແຕ່ລະຊອງ ແລະ ຕຸດ ເພື່ອສະແດງໃຫ້ຜູ້ຊົມໃຊ້ຜະລິດຕະພັນຢາສູບຮັບຮູ້.

ສະຫຼາກຜະລິດຕະພັນຢາສູບ ທີ່ຜະລິດຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ຕ້ອງພິມຂໍ້ຄວາມເປັນພາສາລາວ ກ່ຽວກັບສານເຄມີໃນຄວັນຢາສູບ ຫຼື ຜົນຮ້າຍຕໍ່ສຸຂະພາບ ເພື່ອສະແດງໃຫ້ຜູ້ຊົມໃຊ້ຜະລິດຕະພັນຢາສູບຮັບຮູ້.

ສຳລັບເນື້ອໃນ ແລະ ຮູບແບບ ຂອງສະຫຼາກ ໃຫ້ປະຕິບັດຕາມລະບຽບການ ທີ່ກະຊວງສາທາລະນະສຸກ ກຳນົດອອກໃນແຕ່ລະໄລຍະ.

**ໝວດທີ 4**
**ລາຄາ ແລະ ອາກອນ ຢາສູບ**

**ມາດຕາ 27 (ປັບປຸງ) ລາຄາຢາສູບ**

ລາຄາຢາສູບ ຕ້ອງໄດ້ຮັບການດັດສົມໂດຍຜ່ານນະໂຍບາຍອາກອນໃນແຕ່ລະໄລຍະ ເພື່ອຫຼຸດຜ່ອນການຊົມໃຊ້ຢາສູບຢູ່ໃນສັງຄົມ.

ຂະແໜງການທີ່ກ່ຽວຂ້ອງຂອງລັດ ມີໜ້າທີ່ຕິດຕາມ, ເກັບກຳຂໍ້ມູນກ່ຽວກັບລາຄາຢາສູບໃນແຕ່ລະໄລຍະ ເພື່ອປັບປຸງນະໂຍບາຍອາກອນຢາສູບໃຫ້ສົມເຫດສົມຜົນ.

**ມາດຕາ 28 (ປັບປຸງ) ອາກອນຢາສູບ**

ອາກອນຢາສູບ ຕ້ອງເພີ່ມຂຶ້ນໃນແຕ່ລະໄລຍະ ໂດຍສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ຄວາມສາມາດຊື້ຢາສູບ, ອັດຕາເງິນເຟີ້ ແລະ ຂໍ້ແນະນຳຂອງສົນທິສັນຍາວ່າດ້ວຍການຄວບຄຸມຢາສູບ ເພື່ອຫຼຸດຜ່ອນການຊົມໃຊ້ຢາສູບ.

**ພາກທີ IV**
**ການປົກປ້ອງສຸຂະພາບຈາກຜົນຮ້າຍຂອງຢາສູບ**
**ໝວດທີ 1**
**ການສຶກສາ, ຄົ້ນຄວ້າ, ວິໄຈ,**
**ການໂຄສະນາ, ສຸຂະສຶກສາ ແລະ ການເຂົ້າເຖິງຂໍ້ມູນ ຂ່າວສານ**

**ມາດຕາ 29 (ໃໝ່) ການສຶກສາ, ຄົ້ນຄວ້າ ແລະ ວິໄຈ**

ການສຶກສາ, ຄົ້ນຄວ້າ ແລະ ວິໄຈ ແມ່ນ ຂະບວນການເກັບກຳ, ລວບລວມ ແລະ ວິເຄາະ ຂໍ້ມູນ ຢ່າງເປັນລະບົບ ກ່ຽວກັບປັດໄຈ ຫຼື ສາເຫດຕົ້ນຕໍ ທີ່ພາໃຫ້ເກີດຜົນຮ້າຍຂອງຢາສູບ ຕໍ່ ສຸຂະພາບ, ຄອບຄົວ, ເສດ ຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ

ກະຊວງສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບ ຂະແໜງການອື່ນທີ່ກ່ຽວຂ້ອງ ດຳເນີນການສຶກສາ, ຄົ້ນຄວ້າ ແລະ ວິໄຈ ກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ, ການໄດ້ຮັບຄວັນຢາສູບມືສອງ, ການໂຄສະນາ, ການສົ່ງເສີມ ຜະລິດຕະພັນຢາສູບ ແລະ ການອຸປະຖຳຈາກອຸດສາຫະກຳຢາສູບ, ສະພາບການສູບຢາ, ຄຳເຕືອນສຸຂະພາບ, ໂຄງສ້າງລາຄາຕົ້ນທຶນຢາສູບ, ພາສີ ແລະ ອາກອນຢາສູບ, ຄວາມສາມາດຊື້ຢາສູບ, ຄ່າໃຊ້ຈ່າຍໃນການປິ່ນປົວພະຍາດທີ່ເກີດຈາກຢາສູບ, ຢາສູບນອກລະບົບ, ຜົນກະທົບທີ່ເກີດຈາກຕົ້ນຢາສູບ, ຜົນກະທົບຕໍ່ຊາວກະສິກອນປູກຕົ້ນຢາສູບ, ການປູກພືດເສດຖະກິດຊະນິດອື່ນທົດແທນການປູກຕົ້ນຢາສູບ ແລະ ອື່ນໆ.

**ມາດຕາ 30 (ປັບປຸງ) ການໂຄສະນາ ແລະ ສຸຂະສຶກສາ**

ການໂຄສະນາ ແລະ ສຸຂະສຶກສາ ແມ່ນ ວິທີການປຸກລະດົມ, ໃຫ້ຄວາມຮູ້, ສະໜອງຂໍ້ມູນ ຂ່າວສານ ດ້ານວິທະຍາສາດ ກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງໂດຍຜ່ານສື່ມວນຊົນ ແລະ ວິທີການອື່ນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ໂຄສະນາ ແລະ

ອ່ານຕໍ່ສະບັບໜ້າ...




## ຄ່າຮຽນກັບບັນຫາເສດຖະກິດ

**ໂດຍ: ດັ້ນກິບເມກ**

ສະພາບຝືດເຄືອງທາງເສດຖະກິດ-ການໃຊ້ຈ່າຍຄ່າຄອງຊີບຍັງເປັນບັນຫາໜັກອົກຂອງຄົນໃນສັງຄົມ ເພາະລາຄາສິນຄ້າສ່ວນໃຫຍ່ຍັງຂຶ້ນທົບເຄິ່ງ ຫລື ບາງສິນຄ້າຂຶ້ນກາຍທົບເຄິ່ງ ເຮັດໃຫ້ການໃຊ້ຈ່າຍເປັນພາລະຝືດເຄືອງໜັກຄືເກົ່າ ບວກໃສ່ການໃຊ້ຈ່າຍດ້ານການສຶກສາຂອງລູກຫລານຍິ່ງເຮັດໃຫ້ພໍ່ແມ່ຜູ້ປົກຄອງໜັກໃຈ.

ຍາມເປີດສົກຮຽນໃໝ່ຄ່າໃຊ້ຈ່າຍເຄື່ອງນຸ່ງ-ເຄື່ອງຮຽນຕຳລາຮຽນ; ຖ້າຄອບຄົວໃດມີລູກຫລາຍຄົນຍິ່ງໜັກໜ່ວງ ເພາະລາຍຈ່າຍເພີ່ມຂຶ້ນທົບເຄິ່ງ ແຕ່ລາຍໄດ້ຍັງຄືເກົ່າ, ຜູ້ຂຽນໄດ້ຮັບຟັງທາງສຽງພໍ່ແມ່ຜູ້ປົກຄອງທີ່ຈົ່ມເລື່ອງໃຊ້ຈ່າຍຄ່າເຄື່ອງແບບນັກຮຽນຂອງບາງໂຮງຮຽນທີ່ຕ້ອງໄດ້ຊື້ພາຍໃນໂຮງຮຽນ, ເສື້ອ, ໂສ້ງ, ສາຍແອວ, ເກີບ..., ເຄື່ອງນຸ່ງດັ່ງກ່າວບາງໂຮງຮຽນທີ່ຫັນເປັນທຸລະກິດ ກໍນຳມາຂາຍໃນໂຮງຮຽນ ເຊິ່ງເຂົ້າໃຈວ່າບາງໂຮງຮຽນອາດເຄັ່ງຄັດໃນລະບຽບເກີນໄປ; ເຂົ້າໃຈວ່າລະບຽບເຮັດໃຫ້ຮຽບຮ້ອຍ, ງາມສະເໝີພາບ ແຕ່ໃນຍຸກເສດຖະກິດຝືດ ທາງໂຮງຮຽນຄວນເບິ່ງຄືນວ່າອັນໃດພໍຜ່ອນຜັນ; ອະນຸໂລມໄດ້ກໍຄວນໃຊ້ສະໝອງຄິດທົບທວນຄືນ.

ຍຸກເສດຖະກິດຝືດ ແລະ ບວກໃສ່ນະໂຍບາຍຂອງລັດທີ່ເນັ້ນປະຢັດ..., ຖ້າວ່າເຄື່ອງແບບທີ່ຖືກລະບຽບແທ້ກໍງາມ ແລະ ເຄື່ອງນຸ່ງບາງປະເພດພໍອະນຸໂລມໄດ້ເຊັ່ນ: ເກີບທາງໂຮງຮຽນຄວນເບິ່ງຄືນໃຫ້ເຫັນແຈ້ງໃນສະພາບເສດຖະກິດ, ການຈັດຕັ້ງກ່ຽວຂ້ອງກໍຄວນນຳໄປຄິດ, ສອດສ່ອງກວດກາເບິ່ງສະພາບຕົວຈິງວ່າອັນໃດ ເໝາະສົມເຮົາອາດນຳໃຊ້ໃຫ້ໄດ້ຫລັກການ ແລະ ລະບຽບ ແຕ່ອັນໃດບໍ່ສຳຄັນ ແລະ ຈຳເປັນກໍຄວນໂຍະຍານເພື່ອເຫັນແກ່ເສດຖະກິດຝືດເຄືອງ.

ການສຶກສາພາກລັດຄວນເບິ່ງນະໂຍບາຍຂັ້ນເທິງຂອງລັດຖະບານບໍ່ແມ່ນວ່າອັນໃດກໍຈະຫັນເປັນທຸລະກິດລາຍໄດ້ເຂົ້າໂຮງຮຽນສູ່ແນວ! ບັນຫານໍ້າຖ້ວມກໍມີ, ບັນຫາເສດຖະກິດໜັກອົກ ຍັງບັນຫາໃຊ້ຈ່າຍທາງການສຶກສາອີກ!ຄວນພິຈາລະນາຊ່ວຍກັນ.




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກິ່ງທະນູຄຳ ພິພັດເສລີ**

25. ຄຳຕັດສີນຂອງສານ ໝາຍເຖິງ ຄຳຕັດສີນຂອງສານຂັ້ນຕົ້ນ;

26. ຄຳພິພາກສາ ໝາຍເຖິງ ຄຳຕັດສີນຂອງສານຂັ້ນອຸທອນ ແລະ ຂັ້ນລົບລ້າງ;



# ສະມາຊິກສະພາອາເມລິກາ ມີຄຳເຫັນກ່ຽວກັບເສດຖະກິດພາຍໃນປະເທດ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

*ສະມາຊິກສະພາສູງອາເມຣິກາ ໄດ້ມີຄຳເຫັນກ່າວວ່າ: ທະນາຄານກາງອາເມລິກາ ອາດຈະເຮັດໃຫ້ເສດຖະກິດອາເມລິກາຕົກຢູ່ໃນສະພາບຊຸດໂຊມ.*

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 28 ສິງຫາຜ່ານມາ, ທ່ານ ນາງ ອີລີຊາເບສ ວາເຣນ ສະມາຊິກສະພາສູງຂອງພັກເດໂມແຄຣັດຂອງອາເມລິກາ ກ່າວວ່າ: ທ່ານມີຄວາມເປັນຫ່ວງທີ່ສຸດວ່າ ທະນາຄານກາງອາເມລິກາຈະເຮັດໃຫ້ເສດຖະກິດອາເມລິກາຕົກຢູ່ໃນສະພາບຊຸດໂຊມລົງ, ສ່ວນນະໂຍບາຍເພີ່ມອັດຕາດອກເບ້ຍຂອງທະນາຄານກາງອາເມລິກາ ຈະເຮັດໃຫ້ປະຊາຊົນວ່າງງານ.

ກ່ອນໜ້ານີ້ບໍ່ດົນ, ທ່ານ ເຈໂຣມ ໂປເວວ ຜູ້ວ່າການທະນາຄານກາງອາເມລິກາໄດ້ກ່າວເຕືອນວ່າ: ຄຽງຄູ່ກັບທະນາຄານກາງອາເມລິກາເພີ່ມອັດຕາດອກເບ້ຍ ເພື່ອຮັບມືກັບອັດຕາເງິນເຟີ້ທີ່ເພີ່ມສູງຂຶ້ນແລ້ວ, ຊາວອາເມລິກາອາດຈະເຂົ້າສູ່ໄລຍະລຳບາກຍ້ອນການຂະຫຍາຍຕົວຂອງເສດຖະກິດຊ້າລົງ. ຕໍ່ກັບເລື່ອງນີ້, ທ່ານ ນາງ ອີລີຊາເບສ ວາເຣນ ກ່າວວ່າ: ຄຳທີ່ວ່າ "ລຳບາກ" ທີ່ທ່ານ ໂປເວວ ກ່າວເຖິງນັ້ນໝາຍເຖິງຄົນທັງຫລາຍຈະປະເຊີນໜ້າກັບໄພວ່າງງານ, ວິສາຫະກິດຂະໜາດນ້ອຍຈະປະເຊີນໜ້າກັບການລົ້ມລະລາຍ, ອັດຕາເງິນເຟີ້ທີ່ເພີ່ມສູງຂຶ້ນຢູ່ອາເມລິກາ ແມ່ນຍ້ອນບັນຫາຕ່ອງໂສ້ການສະໜອງ, ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ບັນຫາອື່ນໆ.

ແຫລ່ງຂ່າວ: CRI



# ຊຸກຍູ້ການຮ່ວມມືລະຫວ່າງສະມາຊິກລັດຖະສະພາມິດຕະພາບຫວຽດນາມ-ສ.ເກົາຫລີ

ແປ ແລະ ຮຽບຮຽງ: ທະນາພອນ



ຕາມການລາຍງານຂ່າວໃຫ້ຮູ້ວ່າ: ໃນວັນທີ 24 ສິງຫາຜ່ານມາ ທີ່ຫໍສະພາແຫ່ງຊາດຫວຽດນາມ, ທ່ານ ເວືອງດິ່ງ ເຫວ້ ປະທານສະພາແຫ່ງຊາດຫວຽດນາມ ໄດ້ຕ້ອນຮັບທ່ານ Kim Tae-nyeon ປະທານຄະນະສະມາຊິກລັດຖະສະພາມິດຕະພາບ ສ. ເກົາຫລີ-ຫວຽດນາມ.

ໃນການຕ້ອນຮັບ, ທ່ານ ເວືອງ ດິ່ງ ເຫວ້ ໄດ້ເນັ້ນໜັກວ່າ: ຫວຽດນາມ ຖືເປັນສຳຄັນການພົວພັນກັບ ສ.ເກົາຫລີ ແລະ ຖືວ່າ ສ.ເກົາຫລີ ແມ່ນຄູ່ຮ່ວມມືຍຸດທະສາດສຳຄັນແຖວໜ້າ, ຍາວນານ ດ້ວຍຄວາມໄວ້ເນື້ອເຊື່ອໃຈສູງ, ສະພາແຫ່ງຊາດຫວຽດນາມ ຈະເຮັດຈົນສຸດຄວາມສາມາດຂອງຕົນ ເພື່ອປະກອບສ່ວນປັບປຸງ, ນຳການພົວພັນຄູ່ຮ່ວມມືຍຸດທະສາດຫວຽດນາມ-ສ.ເກົາຫລີ ຂຶ້ນສູ່ລະດັບສູງໃໝ່.

ທ່ານ ເວືອງ ດິ່ງ ເຫວ້ ໄດ້ສະແດງຄວາມປິຕິຊົມຊື່ນຕໍ່ການພັດທະນາຢ່າງແຂງແຮງຂອງການພົວພັນຫວຽດນາມ-ສ.ເກົາຫລີ, ການພົວພັນຮ່ວມມືອັນດີງາມລະຫວ່າງອົງການນິຕິບັນຍັດສອງປະເທດ ແລະ ສອງຄະນະສະມາຊິກລັດຖະສະພາມິດຕະພາບໄດ້ຮັບການເພີ່ມທະວີຢ່າງບໍ່ຢຸດຢັ້ງ, ປະກອບສ່ວນເຂົ້າໃນການພັນຂະຫຍາຍ, ຊຸກຍູ້ບັນດາຂໍ້ຕົກລົງຂອງການນຳຂັ້ນສູງສອງປະເທດ ກໍຄືບັນດາເນື້ອໃນຂໍ້ຕົກລົງຮ່ວມມືທີ່ໄດ້ເຊັນກັນລະຫວ່າງສອງສະພາແຫ່ງຊາດໃນປີ 2013. ທ່ານ ເວືອງ ດິ່ງ ເຫວ້ ຍັງສະແດງຄວາມເຊື່ອໝັ້ນວ່າ ສອງຄະນະສະມາຊິກລັດຖະສະພາມິດຕະພາບຈະສືບຕໍ່ເພີ່ມທະວີການເຄື່ອນໄຫວພົບປະແລກປ່ຽນໃຫ້ປະສົບຜົນສຳເລັດ, ສອດຄ່ອງກັບຕົວຈິງ, ປະກອບສ່ວນຊຸກຍູ້ການພົວພັນສອງຝ່າຍ.

ໂອກາດດັ່ງກ່າວ, ທ່ານ Kim Tae-nyeon ໄດ້ແຈ້ງໃຫ້ປະທານສະພາແຫ່ງຊາດຫວຽດນາມ ຮັບຊາບກ່ຽວກັບຜົນການເຄື່ອນໄຫວຂອງຄະນະຢູ່ຫວຽດນາມ; ສະແດງຄວາມປະທັບໃຈຢ່າງເລິກເຊິ່ງຕໍ່ການພັດທະນາຂອງການພົວພັນຮ່ວມມືລະຫວ່າງສອງປະເທດ ທັງຫວັງວ່າຄະນະສະມາຊິກລັດຖະສະພາມິດຕະພາບສອງປະເທດ ຈະຊຸກຍູ້ການພົບປະແລກປ່ຽນ, ປະກອບສ່ວນຊຸກຍູ້ການພົວພັນລະຫວ່າງສະພາແຫ່ງຊາດສອງປະເທດ ແລະ ຊຸກຍູ້ການພົບປະແລກປ່ຽນລະຫວ່າງປະຊາຊົນສອງປະເທດ.

ແຫລ່ງຂ່າວ: ກປ.ອອນໄລ












**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ